ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 93 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 17 / 07 / 23

# ມະຕິ
## ຂອງກອງປະຊຸມສະພາແຫ່ງຊາດ
## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍ
## ການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ (ສະບັບປັບປຸງ)

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015 ມາດຕາ 53 ຂໍ້ 1;
- ອີງຕາມກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍ ວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ (ສະບັບປັບປຸງ) ໃນວາລະຕອນບ່າຍຂອງກອງປະຊຸມ ຄັ້ງວັນທີ 14 ກໍລະກົດ 2023 ແລະ ຖືກພິຈາລະນາຮັບຮອງເອົາໃນວາລະຕອນບ່າຍຂອງວັນທີ 17 ກໍລະກົດ 2023.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ (ສະບັບປັບປຸງ) ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 099 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 30 ສິງຫາ 2023

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ (ສະບັບປັບປຸງ)**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 93/ສພຊ, ລົງວັນທີ 17 ກໍລະກົດ 2023 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 27/ຄປຈ, ລົງວັນທີ 15 ສິງຫາ 2023.

ປະທານປະເທດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ (ສະບັບປັບປຸງ).

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ທອງລຸນ ສີສຸລິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 43 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 17 ກໍລະກົດ 2023

# ກົດໝາຍ
# ວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ຕິດຕາມ ກວດກາ ວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ໄດ້ຮັບການຈັດຕັ້ງປະຕິບັດ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ຮັບປະກັນໃຫ້ເດັກໄດ້ຮັບການ ປົກປ້ອງ, ຊ່ວຍເຫຼືອ ແລະ ພັດທະນາຢ່າງຮອບດ້ານ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2 (ໃໝ່) ການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ**

ການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ແມ່ນ ການນຳໃຊ້ວິທີການ ແລະ/ຫຼື ມາດຕະການ ເພື່ອຮັບປະກັນໃຫ້ເດັກ ໄດ້ຮັບການ ປົກປ້ອງ, ຊ່ວຍເຫຼືອ, ພັດທະນາ ໃຫ້ມີຄວາມສົມບູນທາງດ້ານຮ່າງກາຍ, ຈິດໃຈ ແລະ ມັນສະໝອງ, ມີຄຸນສົມບັດສິນທຳປະຕິວັດ, ຄວາມຮູ້, ຄວາມສາມາດ, ສາມາດດຳລົງຊີວິດໃນສັງຄົມຢ່າງປອດໄພ, ມີຄຸນນະພາບ ແລະ ກາຍເປັນຜູ້ສືບທອດທີ່ດີຂອງຊາດ.

**ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ເດັກ** ໝາຍເຖິງ ບຸກຄົນທີ່ມີອາຍຸຕ່ຳກວ່າ ສິບແປດປີ;
2. **ເດັກທີ່ຕ້ອງປົກປ້ອງພິເສດ** ໝາຍເຖິງ ເດັກ ກຳພ້າ, ກຳພອຍ, ເດັກຖືກປະລະ, ເດັກຖືກປະຖິ້ມ, ເດັກພິການ, ເດັກຖືກທຳຮ້າຍຮ່າງກາຍ, ເດັກຖືກຂາລຸນທາງເພດ, ເດັກດ້ອຍໂອກາດ, ເດັກຖືກເຄາະຮ້າຍ, ເດັກກະທຳຜິດ, ເດັກທີ່ເປັນພະຍານ, ເດັກເຮັດວຽກຢູ່ໃນສະພາບແວດລ້ອມທີ່ເປັນອັນຕະລາຍຮ້າຍແຮງ ຕໍ່ ຊີວິດ, ສຸຂະພາບ ຫຼື ຖືກຂູດຮີດແຮງງານ, ເດັກອົບພະຍົບ, ເດັກຕິດຢາເສບຕິດ, ເດັກຕິດເຊື້ອພະຍາດຕິດຕໍ່ຮ້າຍແຮງ, ເດັກທີ່ເປັນຜູ້ຖືກເສຍຫາຍໃນຂະບວນການດຳເນີນຄະດີ;
3. **ເດັກກຳພ້າ** ໝາຍເຖິງ ເດັກທີ່ ພໍ່ ຫຼື ແມ່ ໄດ້ເສຍຊີວິດ;

4. **ເດັກກຳພອຍ** ໝາຍເຖິງ ເດັກ ພໍ່ ແລະ ແມ່ ໄດ້ເສຍຊີວິດ;

5. **ເດັກຖືກປະລະ** ໝາຍເຖິງ ເດັກຂາດການເອົາໃຈໃສ່ໃນການເບິ່ງແຍງລ້ຽງດູ, ການສຶກສາອົບຮົມ, ການສົ່ງເສີມ ແລະ ການສະໜອງເງື່ອນໄຂທີ່ຈຳເປັນໃນການພັດທະນາຂອງເດັກຈາກ ພໍ່ ແມ່ ຫຼື ຜູ້ປົກຄອງ ເຊັ່ນ ດ້ານສຸຂະພາບ, ໂພຊະນາການທີ່ພຽງພໍ ແລະ ຖືກຫຼັກອະນາໄມ, ດ້ານທີ່ຢູ່ອາໄສທີ່ປອດໄພ, ດ້ານການສຶກສາ ແລະ ການພັດທະນາທາງດ້ານຈິດໃຈ ບົນພື້ນຖານເງື່ອນໄຂທາງດ້ານເສດຖະກິດຂອງຄອບຄົວ;

6. **ເດັກຖືກປະຖິ້ມ** ໝາຍເຖິງ ເດັກທີ່ຖືກ ພໍ່ ແມ່ ຫຼື ຜູ້ປົກຄອງ ປະຖິ້ມ;

7. **ເດັກພິການ** ໝາຍເຖິງ ເດັກທີ່ມີຄວາມບົກພ່ອງທາງດ້ານ ຮ່າງກາຍ, ການເບິ່ງເຫັນ, ການໄດ້ຍິນ ຫຼື ການປາກເວົ້າ, ສະຕິປັນຍາ, ຄວາມຈື່ຈຳ ແລະ ດ້ານອື່ນ ບວກກັບສິ່ງກີດຂວາງ ຊຶ່ງເປັນອຸປະສັກໃນການເຄື່ອນໄຫວ ຊີວິດປະຈຳວັນ, ການຮຽນຮູ້ ແລະ ການເຂົ້າຮ່ວມກິດຈະກຳທາງສັງຄົມໄດ້ຢ່າງເຕັມສ່ວນ;

8. **ເດັກຖືກທຳຮ້າຍຮ່າງກາຍ** ໝາຍເຖິງ ເດັກທີ່ຖືກທຸບຕີ, ຂ້ຽນຕີ ຫຼື ທໍລະມານຈາກ ພໍ່ ແມ່, ຜູ້ປົກຄອງ ຫຼື ບຸກຄົນອື່ນ;

9. **ເດັກຖືກທາລຸນທາງເພດ** ໝາຍເຖິງ ເດັກທີ່ຖືກຂົ່ມຂືນທຳຊຳເລົາ, ຖືກທຳຊຳເລົາ, ຖືກທຳລາມົກ ຫຼື ອະນາຈານ;

10. **ເດັກດ້ອຍໂອກາດ** ໝາຍເຖິງ ເດັກທີ່ຂາດເງື່ອນໄຂອັນຈຳເປັນໃນການຕອບສະໜອງ ຫຼື ອຳນວຍຄວາມ ສະດວກແກ່ການພັດທະນາຄວາມຮູ້ຄວາມສາມາດ;

11. **ເດັກຖືກເຄາະຮ້າຍ** ໝາຍເຖິງ ເດັກທີ່ໄດ້ຮັບຄວາມເສຍຫາຍທາງດ້ານຮ່າງກາຍ, ຈິດໃຈ, ກຽດສັກສີ, ສິດເສລີພາບ, ຊັບສິນ ຫຼື ເສດຖະກິດ ຈາກການກະທຳຂອງ ພໍ່ ແມ່, ຜູ້ປົກຄອງ ຫຼື ບຸກຄົນອື່ນ;

12. **ເດັກກະທຳຜິດ** ໝາຍເຖິງ ເດັກທີ່ມີພຶດຕິກຳຕາມທີ່ໄດ້ກຳນົດໄວ້ໃນປະມວນກົດໝາຍອາຍາ ແລະ ກົດໝາຍອື່ນ ທີ່ກຳນົດໂທດທາງອາຍາ;

13. **ເດັກຕິດຢາເສບຕິດ** ໝາຍເຖິງ ເດັກທີ່ໃຊ້ສານກະຕຸ້ນ ຫຼື ລະງັບລະບົບປະສາດທີ່ໄດ້ມາຈາກພືດທີ່ໃຫ້ ສານເສບຕິດ ຫຼື ຈາກການສັງເຄາະສານເຄມີ ຊຶ່ງຈະມີຜົນກະທົບຢ່າງຮຸນແຮງ ຕໍ່ ຮ່າງກາຍ, ຈິດປະສາດ ແລະ ຈະມີ ຄວາມຕ້ອງການເສບເພີ່ມຂຶ້ນເລື້ອຍໆ;

14. **ເດັກຕິດພະຍາດຕິດຕໍ່ທີ່ຮ້າຍແຮງ** ໝາຍເຖິງ ເດັກທີ່ເປັນພະຍາດ ທີ່ເກີດຈາກເຊື້ອພະຍາດ ຫຼື ພິດຂອງ ເຊື້ອພະຍາດ ຊຶ່ງສາມາດແຜ່, ຕິດແປດ ໂດຍທາງກົງ ຫຼື ທາງອ້ອມ;

15. **ນັກສັງຄົມສົງເຄາະ** ໝາຍເຖິງ ບຸກຄົນທີ່ໄດ້ຮັບການແຕ່ງຕັ້ງຈາກອົງການຈັດຕັ້ງທີ່ກ່ຽວຂ້ອງຂອງລັດ ເພື່ອໃຫ້ການຊ່ວຍເຫຼືອເດັກທີ່ຕ້ອງປົກປ້ອງພິເສດ;

16. **ໂພຊະນາການ** ໝາຍເຖິງ ອາຫານທີ່ມີທາດບຳລຸງລ້ຽງ, ມີປະໂຫຍດ ແລະ ມີຄວາມປອດໄພ ເພື່ອເຮັດໃຫ້ ຮ່າງກາຍຈະເລີນເຕີບໂຕ ມີຄວາມສົມບູນ ແລະ ມັນສະໝອງມີການພັດທະນາ;

17. **ການຊ່ວຍເຫຼືອເດັກ** ໝາຍເຖິງ ການເຄື່ອນໄຫວຂອງບຸກຄົນ ແລະ ການຈັດຕັ້ງ ເພື່ອກອບກູ້ເອົາເດັກທີ່ຕົກ ຢູ່ໃນສະພາບແວດລ້ອມທີ່ເປັນອັນຕະລາຍ, ຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງເດັກ, ນຳສົ່ງເດັກກັບຄືນສູ່ ຄອບຄົວ ແລະ ເພື່ອໃຫ້ເດັກປັບຕົວເຂົ້າກັບສັງຄົມ.

**ມາດຕາ 4 (ປັບປຸງ) ສິດ ແລະ ຜົນປະໂຫຍດຂອງເດັກ**

ເດັກທຸກຄົນ ມີ ສິດ ແລະ ຜົນປະໂຫຍດ ດັ່ງນີ້:

1. ດຳລົງຊີວິດຢ່າງປອດໄພ ແລະ ໄດ້ຮັບການພັດທະນາທາງດ້ານຮ່າງກາຍ, ຈິດໃຈ ແລະ ມັນສະໝອງ ຢ່າງເໝາະສົມ;

2. ໄດ້ຮັບການຈົດທະບຽນການເກີດ, ການຕັ້ງ ຊື່, ນາມສະກຸນ ແລະ ການໄດ້ສັນຊາດ;

3. ຖືກຮັບຮູ້ ແລະ ໄດ້ຮັບການເບິ່ງແຍງດູແລຈາກພໍ່ ແມ່ ຫຼື ຜູ້ປົກຄອງ ແລະ ບໍ່ຖືກແຍກອອກຈາກ ພໍ່ ແມ່ ຫຼື ຜູ້ປົກຄອງ ເວັ້ນເສຍແຕ່ໃນກໍລະນີເພື່ອປົກປ້ອງຜົນປະໂຫຍດຂອງເດັກ;

4. ໄດ້ຮັບການເບິ່ງແຍງດ້ານສຸຂະພາບ, ການປິ່ນປົວ ແລະ ຟື້ນຟູສຸຂະພາບໃນເວລາເຈັບເປັນ;

5. ໄດ້ຮັບການສຶກສາ ເພື່ອໃຫ້ມີຄຸນສົມບັດສົມທຳປະຕິວັດ, ຄວາມຮູ້, ຄວາມສາມາດ, ພອນສະຫວັນ, ວິຊາຊີບ, ສີມືແຮງງານ ແລະ ມີວຽກເຮັດງານທຳ;

6. ປາກເວົ້າ, ສະແດງຄຳຄິດຄຳເຫັນ, ພົບປະ ແລະ ແລກປ່ຽນບົດຮຽນທີ່ດີກັບເດັກດ້ວຍກັນ, ເຂົ້າຮ່ວມກິດຈະກຳທາງສັງຄົມ, ສິລະປະ, ວັນນະຄະດີ, ກິລາ-ກາຍຍະກຳ ແລະ ການພັກຜ່ອນທີ່ເໝາະສົມກັບໄວອາຍຸຂອງເດັກ;

7. ໄດ້ຮັບ ແລະ ຮູ້ ຂໍ້ມູນ ຂ່າວສານ ຊຶ່ງມີເນື້ອໃນທີ່ເໝາະສົມກັບໄວອາຍຸ, ລະດັບ ການພັດທະນາ ແລະ ວັດທະນະທຳ ຂອງເດັກ ພ້ອມທັງໄດ້ຮັບການປົກປ້ອງຈາກ ຂໍ້ມູນ ຂ່າວສານ ທີ່ເປັນອັນຕະລາຍຕໍ່ເດັກ;

8. ໄດ້ຮັບການປົກປ້ອງຈາກທຸກຮູບການທາລຸນ ທາງດ້ານຮ່າງກາຍ ແລະ ຈິດໃຈ ຕໍ່ເດັກ;

9. ໄດ້ຮັບການປົກປ້ອງພິເສດ ໃນການແກ້ໄຂຄະດີເດັກ ທາງດ້ານບໍລິຫານ ແລະ ຂະບວນການຍຸຕິທຳ;

10. ໄດ້ຮັບສິດ ແລະ ຜົນປະໂຫຍດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 5 (ໃໝ່) ນະໂຍບາຍຂອງລັດກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ**

ລັດ ຖືສຳຄັນ ແລະ ສົ່ງເສີມວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ດ້ວຍການກຳນົດ ນະໂຍບາຍ, ແຜນຍຸດທະສາດ, ແຜນການ, ແຜນງານ, ໂຄງການ, ກິດຈະກຳ ແລະ ມາດຕະການສະເພາະທີ່ເໝາະສົມ, ການພັດທະນາຊັບພະຍາກອນມະນຸດ, ປະກອບບຸກຄະລາກອນ, ສະໜອງງົບປະມານ ແລະ ວັດຖຸປະກອນ ເພື່ອສ້າງຄວາມເຂັ້ມແຂງໃຫ້ວຽກງານດັ່ງກ່າວ ພ້ອມທັງສ້າງທຸກເງື່ອນໄຂ ແລະ ເອື້ອອຳນວຍໃຫ້ເດັກ ໄດ້ຮັບການພັດທະນາຕົນເອງຢ່າງຮອບດ້ານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ລັດ ຊຸກຍູ້, ປຸກລະດົມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ເຂົ້າຮ່ວມ, ສະໜັບສະໜູນ ແລະ ປະກອບສ່ວນດ້ານ ທຶນ, ເຕັກນິກວິຊາການ ເຂົ້າໃນວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ.

**ມາດຕາ 6 (ໃໝ່) ຫຼັກການກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ**

ວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;
2. ຮັບປະກັນສິດ ແລະ ຜົນປະໂຫຍດສູງສຸດຂອງເດັກ;
3. ປົກປ້ອງເດັກຈາກການຈຳແນກທຸກຮູບແບບ;
4. ປະສານສົມທົບ ແລະ ມີການເຂົ້າຮ່ວມຂອງຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ທຸກພາກສ່ວນໃນສັງຄົມ;
5. ຮັບປະກັນຄວາມໂປ່ງໃສ, ຍຸຕິທຳ ແລະ ສາມາດກວດສອບໄດ້;
6. ຮັກສາຄວາມລັບຂອງເດັກທີ່ເປັນຜູ້ກະທຳຜິດ, ຖືກເຄາະຮ້າຍ ຫຼື ເປັນພະຍານ;
7. ປະຕິບັດສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

**ມາດຕາ 7 (ໃໝ່) ຂອບເຂດການນຳໃຊ້**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ພົວພັນ ແລະ ເຄື່ອນໄຫວກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຢູ່ ສປປ ລາວ.

**ມາດຕາ 8 (ປັບປຸງ) ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ດ້ວຍການແລກປ່ຽນ ບົດຮຽນ, ຂໍ້ມູນ ຂ່າວສານ ແລະ ການພັດທະນາຊັບພະຍາກອນມະນຸດ, ປະຕິບັດສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

## ພາກທີ II
## ການຮັກສາສຸຂະພາບ, ທະບຽນຄອບຄົວ, ການເບິ່ງແຍງ ແລະ ການລ້ຽງດູ ເດັກ
## ໝວດທີ 1
## ການຮັກສາສຸຂະພາບເດັກ

**ມາດຕາ 9 (ປັບປຸງ) ການສະໜອງ ຂໍ້ມູນ ຂ່າວສານ ດ້ານສຸຂະພາບ**

ເດັກທຸກຄົນ ມີສິດໄດ້ຮັບຂໍ້ມູນ ຂ່າວສານດ້ານສຸຂະພາບທີ່ຖືກຕ້ອງ ຈາກຂະແໜງການ, ອົງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໂດຍກົງ ຫຼື ຜ່ານພາຫະນະສື່ມວນຊົນ.

ຂະແໜງການ ສາທາລະນະສຸກ, ສຶກສາທິການ ແລະ ກິລາ, ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ການຈັດຕັ້ງອື່ນ ທັງພາກລັດ ແລະ ເອກະຊົນ ມີຄວາມຮັບຜິດຊອບ ຫຼື ປະກອບສ່ວນ ໃນການສະໜອງ ຂໍ້ມູນ ຂ່າວສານ ດ້ານສຸຂະພາບ ແລະ ໂພຊະນາການ ໃຫ້ແກ່ເດັກ ຢ່າງເປັນປົກກະຕິ.

**ມາດຕາ 10 (ປັບປຸງ) ການຮັກສາສຸຂະພາບ ແລະ ການໂພຊະນາການສຳລັບແມ່ຍິງຖືພາ**

ຂະແໜງການສາທາລະນະສຸກ ຕ້ອງສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກ ໃຫ້ແມ່ຍິງຖືພາ ໄດ້ຮັບການບໍລິການທາງດ້ານສຸຂະພາບໃນເວລາຖືພາ ແລະ ຫຼັງອອກລູກ ຕາມລະບຽບການ ເປັນຕົ້ນ ການກວດກາ, ການຕິດຕາມຄວາມສ່ຽງຕ່າງໆທີ່ອາດຈະເກີດຂຶ້ນ, ໃຫ້ການຊ່ວຍເຫຼືອ ແມ່ຍິງຖືພາ ແລະ ອອກລູກ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຕ້ອງປະກອບສ່ວນໃຫ້ ຂໍ້ມູນ ຂ່າວສານ ແກ່ແມ່ຍິງທີ່ພວມຖືພາ ຮັບຮູ້ ແລະ ເຂົ້າໃຈກ່ຽວກັບໂພຊະນາການ ເປັນຕົ້ນ ການກິນອາຫານທີ່ມີປະໂຫຍດ ແລະ ບໍ່ເປັນອັນຕະລາຍຕໍ່ສຸຂະພາບ ເພື່ອໃຫ້ເດັກເກີດມາມີຄວາມສົມບູນທາງດ້ານຮ່າງກາຍ, ຈິດໃຈ ແລະ ມັນສະໝອງ.

**ມາດຕາ 11 (ປັບປຸງ) ການຮັກສາສຸຂະພາບເດັກຂັ້ນຕົ້ນ**

ເດັກ ໄດ້ຮັບການຮັກສາສຸຂະພາບຂັ້ນຕົ້ນ ດັ່ງນີ້:

1. ການເບິ່ງແຍງດູແລເດັກຕັ້ງແຕ່ໃນທ້ອງແມ່ເປັນຕົ້ນມາ;
2. ການໃຫ້ຢາ, ວັກຊີນກັນພະຍາດ ຕາມອາຍຸຂອງເດັກຢ່າງຄົບຖ້ວນ;
3. ການສະໜອງດ້ານໂພຊະນາການຢ່າງພຽງພໍ;
4. ການສະໜອງ ຂໍ້ມູນ ຂ່າວສານ ແລະ ສຶກສາທາງດ້ານການຮັກສາສຸຂະພາບທີ່ສອດຄ່ອງກັບລະດັບໄວອາຍຸ ແລະ ຄວາມເຂົ້າໃຈຂອງເດັກ;
5. ການບໍລິການປິ່ນປົວ ແລະ ການຟື້ນຟູສຸຂະພາບເດັກ;
6. ການກວດ ແລະ ຕິດຕາມສຸຂະພາບ ເດັກ ຢ່າງເປັນປົກກະຕິ;
7. ການບໍລິການອື່ນໃນການຮັກສາສຸຂະພາບເດັກຂັ້ນຕົ້ນ.

### ມາດຕາ 12 (ປັບປຸງ) ການຕິດຕາມ ແລະ ການປິ່ນປົວ ສຸຂະພາບເດັກ

ເດັກພາຍຫຼັງເກີດ ມີສິດໄດ້ຮັບການກວດສຸຂະພາບ ແລະ ຕິດຕາມການຈະເລີນເຕີບໂຕຢ່າງເປັນປົກກະຕິ, ໃນເວລາເຈັບເປັນຕ້ອງໄດ້ຮັບການກວດ ແລະ ປິ່ນປົວ ສຸຂະພາບ ຢູ່ສະຖານທີ່ບໍລິການປິ່ນປົວແຫ່ງຕ່າງໆ.

ເດັກອາຍຸ ສິບຫ້າປີ ຫາຕໍ່າກວ່າ ສິບແປດປີ ມີສິດຕັດສິນໃຈໃນການເລືອກວິທີ ຫຼື ສະຖານທີ່ປິ່ນປົວທີ່ເໝາະສົມ, ເວັ້ນເສຍແຕ່ເດັກນັ້ນ ຫາກຢູ່ໃນການຄວບຄຸມຂອງເຈົ້າໜ້າທີ່ ຫຼື ບໍ່ມີສະຕິສົມບູນ.

### ມາດຕາ 13 (ປັບປຸງ) ການປິ່ນປົວເດັກຕິດເຊື້ອພະຍາດຕິດຕໍ່ຮ້າຍແຮງ

ຂະແໜງການສາທາລະນະສຸກ, ຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ທັງພາກລັດ ແລະ ເອກະຊົນ ຕ້ອງສ້າງເງື່ອນໄຂໃຫ້ເດັກທີ່ຕິດເຊື້ອພະຍາດຕິດຕໍ່ຮ້າຍແຮງໄດ້ເຂົ້າເຖິງການບໍລິການປິ່ນປົວ ແລະ ຟື້ນຟູສຸຂະພາບ ເພື່ອໃຫ້ເດັກສາມາດດໍາລົງຊີວິດຮ່ວມກັບ ຄອບຄົວ, ຊຸມຊົນ ແລະ ສັງຄົມ ໂດຍປາສະຈາກການຈໍາແນກທຸກຮູບແບບ.

ຂະແໜງການສາທາລະນະສຸກ ຕ້ອງມີມາດຕະການປິ່ນປົວເດັກທີ່ຕິດເຊື້ອພະຍາດຕິດຕໍ່ຮ້າຍແຮງ ດັ່ງນີ້:

1. ຕ້ານ ແລະ ສະກັດກັ້ນ ເຊື້ອພະຍາດຕິດຕໍ່ຮ້າຍແຮງ ບໍ່ໃຫ້ແຜ່ລາມ;
2. ໃຫ້ຄໍາປຶກສາຕໍ່ເດັກທີ່ຕິດເຊື້ອພະຍາດຕິດຕໍ່ຮ້າຍແຮງ ແລະ ຮັກສາເປັນຄວາມລັບສະພາບການຕິດເຊື້ອພະຍາດຂອງເດັກ;
3. ໃຫ້ການຊ່ວຍເຫຼືອໃນການປິ່ນປົວ ແລະ ຟື້ນຟູສຸຂະພາບເດັກທີ່ຕິດເຊື້ອພະຍາດຕິດຕໍ່ຮ້າຍແຮງ;
4. ຊຸກຍູ້ ສັງຄົມ ແລະ ຊຸມຊົນ ໃຫ້ການຊ່ວຍເຫຼືອເດັກ ແລະ ຄອບຄົວ ທີ່ໄດ້ຮັບຜົນກະທົບຈາກເຊື້ອພະຍາດຕິດຕໍ່ຮ້າຍແຮງ;
5. ນໍາໃຊ້ມາດຕະການປິ່ນປົວອື່ນ ທີ່ຈໍາເປັນ.

## ໝວດທີ 2
## ທະບຽນຄອບຄົວເດັກ

### ມາດຕາ 14 (ໃໝ່) ການແຈ້ງເກີດເດັກ

ເມື່ອມີເດັກເກີດຢູ່ໂຮງໝໍ ຫຼື ສະຖານທີ່ບໍລິການປິ່ນປົວອື່ນ ໃຫ້ສະຖານທີ່ດັ່ງກ່າວອອກໃບແຈ້ງເກີດ ພາຍໃນເວລາເຈັດວັນ ນັບແຕ່ວັນເດັກເກີດເປັນຕົ້ນໄປ ແລ້ວໃຫ້ ພໍ່, ແມ່ ຫຼື ຜູ້ຕາງໜ້າຄອບຄົວໄປແຈ້ງຕໍ່ອົງການປົກຄອງບ້ານ ເພື່ອຮັບຮູ້ກ່ອນໄປແຈ້ງຈົດທະບຽນການເກີດ.

ໃນກໍລະນີເດັກເກີດຢູ່ນອກ ໂຮງໝໍ ຫຼື ສະຖານທີ່ບໍລິການປິ່ນປົວອື່ນ ເປັນຕົ້ນ ຢູ່ເຮືອນ, ນາ, ໄຮ່, ສວນ ໃຫ້ ພໍ່, ແມ່ ຫຼື ຜູ້ຕາງໜ້າຄອບຄົວ ໄປແຈ້ງຕໍ່ອົງການປົກຄອງບ້ານບ່ອນຕົນອາໄສຢູ່ ພາຍໃນເວລາ ສິບຫ້າວັນ ນັບແຕ່ວັນເດັກເກີດ ເປັນຕົ້ນໄປ.

ບຸກຄົນທີ່ໄດ້ພົບເຫັນເດັກເກີດໃໝ່ ທີ່ຖືກປະຖິ້ມໄວ້ ຕ້ອງໃຫ້ການຊ່ວຍເຫຼືອ ແລະ ໃຫ້ໄປແຈ້ງຕໍ່ອົງການປົກຄອງບ້ານ ຫຼື ເຈົ້າໜ້າທີ່ຕໍາຫຼວດໃນເຂດບ່ອນຕົນພົບເຫັນເດັກນັ້ນໂດຍໄວ.

ເມື່ອໄດ້ຮັບການແຈ້ງຕາມວັກທີສອງ ແລະ ສາມ ຂອງມາດຕານີ້ແລ້ວ ນາຍບ້ານ ຕ້ອງອອກໃບແຈ້ງເກີດພາຍໃນເວລາເຈັດວັນ ນັບແຕ່ວັນໄດ້ຮັບແຈ້ງ ເປັນຕົ້ນໄປ.

ເມື່ອໄດ້ຮັບໃບແຈ້ງເກີດແລ້ວ ພໍ່, ແມ່ ຫຼື ຜູ້ຕາງໜ້າຄອບຄົວ ຫຼື ພາກສ່ວນທີ່ເບິ່ງແຍງດູແລເດັກຊົ່ວຄາວນັ້ນ ຕ້ອງແຈ້ງຈົດທະບຽນການເກີດຢູ່ຫ້ອງການພາຍໃນ ຂັ້ນເມືອງ ບ່ອນຕົນອາໄສຢູ່ ຫຼື ພັກເຊົາຊົ່ວຄາວ ພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບໃບແຈ້ງເກີດ ຫຼື ວັນຮັບເອົາເດັກໄປລ້ຽງ ເປັນຕົ້ນໄປ.

ສໍາລັບເດັກເກີດຢູ່ຕ່າງປະເທດນັ້ນ ໃຫ້ ພໍ່, ແມ່ ຫຼື ຜູ້ຕາງໜ້າຄອບຄົວ ໄປແຈ້ງຕໍ່ໜ່ວຍງານທະບຽນຄອບຄົວຢູ່ສໍານັກງານຜູ້ຕາງໜ້າຂອງ ສປປ ລາວ ຢູ່ຕ່າງປະເທດ ບ່ອນເດັກເກີດ.

**ມາດຕາ 15 (ປັບປຸງ) ການຈົດທະບຽນການເກີດ**

ການຈົດທະບຽນການເກີດ ໃຫ້ດໍາເນີນຢູ່ຫ້ອງການພາຍໃນ ຂັ້ນເມືອງ, ໜ່ວຍງານທະບຽນຄອບຄົວຢູ່ສໍານັກງານຜູ້ຕາງໜ້າຂອງ ສປປ ລາວ ຢູ່ຕ່າງປະເທດ ເມື່ອໄດ້ຮັບເອກະສານແລ້ວ ຕ້ອງຈົດເນື້ອໃນການແຈ້ງເກີດ ແລະ ເລກລະຫັດບຸກຄົນເຂົ້າປຶ້ມທະບຽນຄອບຄົວ, ບັນທຶກເຂົ້າໃນຖານຂໍ້ມູນທະບຽນຄອບຄົວເອເລັກໂຕຣນິກ ແລະ ອອກໃບຢັ້ງຢືນການເກີດ ພາຍໃນເວລາ ຫ້າວັນ ລັດຖະການ ນັບແຕ່ວັນໄດ້ຮັບການແຈ້ງຂໍຈົດທະບຽນການເກີດ ເປັນຕົ້ນໄປ.

ພາຍຫຼັງໄດ້ໃບຢັ້ງຢືນການເກີດແລ້ວ ໃຫ້ໄປຈົດເຂົ້າປຶ້ມທະບຽນສໍາມະໂນຄົວ ຢູ່ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນເມືອງ ບ່ອນຕົນອາໄສຢູ່.

ການຈົດທະບຽນການເກີດຂອງເດັກ ຈະຖືກຍົກເວັ້ນ ຄ່າທໍານຽມ ແລະ ຄ່າບໍລິການ.

**ມາດຕາ 16 (ປັບປຸງ) ຊື່ ແລະ ນາມສະກຸນຂອງເດັກ**

ພໍ່ ແມ່ ຫຼື ຜູ້ປົກຄອງ ເປັນຜູ້ເລືອກຊື່ຂອງເດັກ ຕາມໃຈມັກ ແລະ ຕາມການເຫັນດີນໍາກັນ. ຜູ້ເປັນລູກ ມີສິດປ່ຽນຊື່ຂອງຕົນ ຕາມລະບຽບການ ຖ້າຕົນຫາກພົ້ນກະສຽນອາຍຸແລ້ວ.

ນາມສະກຸນຂອງເດັກ ໃຫ້ໃສ່ຕາມນາມສະກຸນຂອງ ພໍ່ ແມ່ ຖ້າພໍ່ ແມ່ ໃສ່ນາມສະກຸນດຽວກັນ.

ຖ້າພໍ່ ແມ່ ໃສ່ນາມສະກຸນຕ່າງກັນ ເດັກ ອາດໃສ່ນາມສະກຸນຂອງພໍ່ ຫຼື ຂອງແມ່ ຫຼື ຂອງທັງສອງ ກໍໄດ້ ຕາມການເຫັນດີຂອງພໍ່ ແມ່. ຖ້າຫາກຕົກລົງກັນບໍ່ໄດ້ແລ້ວ ເດັກ ຈະໃສ່ນາມສະກຸນ ຕາມຄໍາຕັດສິນຂອງສານ.

ເມື່ອ ພໍ່ ແມ່ ຂອງເດັກ ມີການຢ່າຮ້າງ ຫຼື ຮັບຮູ້ການແຕ່ງດອງເປັນໂມຄະ ຕາມຄໍາຕັດສິນຂອງສານແລ້ວ ນາມສະກຸນຂອງລູກ ຈະບໍ່ມີການປ່ຽນແປງ. ຖ້າ ພໍ່ ຫຼື ແມ່ ທີ່ລູກຢູ່ນໍາ ຫາກຕ້ອງການໃຫ້ລູກໃສ່ນາມສະກຸນຂອງຕົນ ກໍມີສິດໃຫ້ລູກທີ່ຍັງບໍ່ທັນພົ້ນກະສຽນອາຍຸນັ້ນ ປ່ຽນມາໃສ່ນາມສະກຸນນໍາຕົນກໍໄດ້.

ໃນກໍລະນີຕ້ອງການປ່ຽນຊື່ ຫຼື ນາມສະກຸນນັ້ນ ໃຫ້ປະຕິບັດຕາມປະມວນກົດໝາຍແພ່ງ ແລະ ກົດໝາຍວ່າດ້ວຍທະບຽນຄອບຄົວ.

## ໝວດທີ 3
## ການເບິ່ງແຍງ ແລະ ການລ້ຽງດູເດັກ

**ມາດຕາ 17 (ປັບປຸງ) ການເບິ່ງແຍງ ແລະ ການລ້ຽງດູເດັກ**

ພໍ່ ແມ່, ຜູ້ປົກຄອງ, ສະມາຊິກໃນຄອບຄົວ, ຍາດພີ່ນ້ອງ, ສັງຄົມ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ ຕ້ອງເບິ່ງແຍງ ແລະ ລ້ຽງດູເດັກ ດ້ວຍການໃຫ້ຄວາມອົບອຸ່ນ, ໃຫ້ຄວາມໃກ້ຊິດ, ຮັກແພງ, ໃຫ້ຄໍາປຶກສາ, ສຶກສາອົບຮົມ, ຊ່ວຍເຫຼືອ ແລະ ອື່ນໆ ເພື່ອພັດທະນາທາງດ້ານຮ່າງກາຍ, ຈິດໃຈ ແລະ ມັນສະໝອງຂອງເດັກ.

**ມາດຕາ 18 (ປັບປຸງ) ການແຕ່ງຕັ້ງຜູ້ປົກຄອງເດັກ**

ເດັກທີ່ຂາດການເບິ່ງແຍງຈາກ ພໍ່ ແມ່ ເປັນຕົ້ນ ເດັກກໍາພອຍ, ເດັກຖືກປະຖິ້ມ, ເດັກທີ່ພໍ່ ແລະ ແມ່ ຖືກປົດສິດໃນການເປັນພໍ່ ແມ່, ເດັກທີ່ພໍ່ ແລະ ແມ່ ຖືກກັກຂັງ ຫຼື ຖືກສານຕັດສິນລົງໂທດຕັດອິດສະລະພາບນັ້ນ ນາຍບ້ານຕ້ອງແຕ່ງຕັ້ງຜູ້ປົກຄອງເດັກ ໂດຍໃຫ້ເລືອກເອົາຈາກຍາດພີ່ນ້ອງໃກ້ຊິດຂອງເດັກ ພາຍໃນເວລາ ໜຶ່ງເດືອນ ນັບແຕ່ວັນໄດ້ຮັບແຈ້ງ ເປັນຕົ້ນໄປ.

ໃນກໍລະນີຫາກບໍ່ມີຍາດໃກ້ຊິດ, ຍາດໃກ້ຊິດ ບໍ່ຮັບເປັນຜູ້ປົກຄອງ ຫຼື ຍາດໃກ້ຊິດ ມີພຶດຕິກຳໃດໜຶ່ງ ທີ່ຂັດກັບຜົນປະໂຫຍດຂອງເດັກ ນາຍບ້ານ ຕ້ອງສະເໜີຕໍ່ສານ ເພື່ອພິຈາລະນາແຕ່ງຕັ້ງ ບຸກຄົນອື່ນເປັນຜູ້ປົກຄອງເດັກ.

**ມາດຕາ 19 (ປັບປຸງ) ພັນທະຂອງພໍ່ ແມ່ ຫຼື ຜູ້ປົກຄອງ ໃນການເບິ່ງແຍງ ແລະ ລ້ຽງດູ**

ພໍ່ ແລະ ແມ່ ມີພັນທະຮ່ວມກັນໃນການເບິ່ງແຍງ ແລະ ລ້ຽງດູລູກ ໂດຍບໍ່ຂຶ້ນກັບສະພາບການເປັນຜົວເມຍກັນ ຕາມທີ່ໄດ້ກຳນົດໄວ້ໃນປະມວນກົດໝາຍແພ່ງ.

ພໍ່ ແມ່ ຫຼື ຜູ້ປົກຄອງເດັກ ມີພັນທະສ້າງ ແລະ ສະໜອງເງື່ອນໄຂທີ່ດີໃຫ້ແກ່ເດັກ ເພື່ອໃຫ້ເດັກມີສຸຂະພາບແຂງແຮງ, ມີການພັດທະນາ ແລະ ມີອະນາຄົດທີ່ດີ. ຖ້າວ່າພໍ່ ແມ່ ຫຼື ຜູ້ປົກຄອງ ປະສົບບັນຫາໃນການລ້ຽງດູເດັກ ຊຶ່ງບໍ່ສາມາດແກ້ໄຂດ້ວຍຕົນເອງໄດ້ ກໍໃຫ້ຂໍຄຳປຶກສາ ແລະ ການຊ່ວຍເຫຼືອຈາກອົງການຈັດຕັ້ງທີ່ກ່ຽວຂ້ອງ.

ໃນກໍລະນີ ພໍ່ ແມ່ ຫຼື ຜູ້ປົກຄອງເດັກ ຫາກບໍ່ມີຄວາມສາມາດເບິ່ງແຍງ ແລະ ລ້ຽງດູໄດ້ ໃຫ້ແຈ້ງຕໍ່ຕາໜ່າງປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ບ່ອນຕົນອາໄສຢູ່ ເພື່ອໃຫ້ການຊ່ວຍເຫຼືອເດັກ.

## ພາກທີ III
## ການພັດທະນາເດັກ
### ໝວດທີ 1
### ການສຶກສາສຳລັບເດັກ

**ມາດຕາ 20 (ປັບປຸງ) ການສົ່ງເສີມການສຶກສາໃຫ້ແກ່ເດັກ**

ຂະແໜງການສຶກສາທິການ ແລະ ກິລາ, ຂະແໜງການອື່ນ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕ້ອງສ້າງເງື່ອນໄຂໃຫ້ເດັກໄດ້ຮັບການສຶກສາ ດ້ວຍການຂະຫຍາຍສະຖານລ້ຽງເດັກ ແລະ ພັດທະນາເດັກ, ສະຖານການຮຽນ-ການສອນ ເດັກອະນຸບານ, ຊັ້ນປະຖົມສຶກສາ ແລະ ຊັ້ນມັດທະຍົມສຶກສາ, ສູນຝຶກວິຊາຊີບ ແລະ ສູນຝຶກສີມືແຮງງານ ທັງພາກລັດ ແລະ ເອກະຊົນ, ສະໜອງຄູ, ສ້າງ, ພັດທະນາຫຼັກສູດ, ອຸປະກອນ, ສື່ການຮຽນ-ການສອນ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ເພື່ອພັດທະນາເດັກໃຫ້ມີຄວາມຮູ້, ຄວາມສາມາດ, ຄຸນສົມບັດ ແລະ ພອນສະຫວັນ.

ພໍ່ ແມ່ ຫຼື ຜູ້ປົກຄອງເດັກ ແລະ ການຈັດຕັ້ງສັງຄົມ ມີພັນທະສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ເດັກໄດ້ເຂົ້າໂຮງຮຽນ ແລະ ແກ້ໄຂອຸປະສັກຂັດຂວາງເດັກ ໃນການໄດ້ຮັບການສຶກສາ.

**ມາດຕາ 21 (ປັບປຸງ) ໂຮງຮຽນເພື່ອນເດັກ**

ໂຮງຮຽນເພື່ອນເດັກ ແມ່ນ ໂຮງຮຽນທີ່ມີສະພາບແວດລ້ອມທີ່ດີ ເໝາະສົມແກ່ການຮຽນ, ການສຶກສາຄົ້ນຄວ້າສຳລັບເດັກ, ມີການຊ່ວຍເຫຼືອຈາກຄູ, ສ້າງໃຫ້ເດັກເອົາໃຈໃສ່ໃນການຮຽນ, ຄວາມຮັກແພງສາມັກຄີລະຫວ່າງນັກຮຽນດ້ວຍກັນ, ປົກປ້ອງເດັກຈາກການໃຊ້ຄວາມຮຸນແຮງ, ການທຸບຕີ, ຂ້ຽນຕີ, ໃຊ້ຄຳເວົ້າ ຫຼື ການກະທຳທີ່ບໍ່ເໝາະສົມ ຊຶ່ງເປັນການແຕະຕ້ອງເຖິງກຽດສັກສີຂອງເດັກ, ປາສະຈາກ ການຈຳແນກ ຫຼື ການລຳອຽງ ແລະ ການເຮັດວຽກ ຫຼື ອອກແຮງງານເກີນຂອບເຂດ.

**ມາດຕາ 22 (ປັບປຸງ) ການສົ່ງເສີມເດັກທີ່ມີພອນສະຫວັນ**

ຂະແໜງການສຶກສາທິການ ແລະ ກິລາ, ຂະແໜງການອື່ນ, ອົງການ, ອົງການປົກຄອງທ້ອງຖິ່ນ, ຊຸມຊົນ, ສັງຄົມ ແລະ ຄອບຄົວ ຕ້ອງສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ເດັກທີ່ມີພອນສະຫວັນໄດ້ພັດທະນາ, ໃຊ້ຄວາມຮູ້, ຄວາມສາມາດ ຂອງຕົນຢ່າງເຕັມສ່ວນ ໄປຄຽງຄູ່ກັບການສຶກສາທົ່ວໄປ.

**ມາດຕາ 23 (ປັບປຸງ) ການສຶກສາສໍາລັບເດັກດ້ອຍໂອກາດ**

ຂະແໜງການສຶກສາທິການ ແລະ ກິລາ, ຂະແໜງການອື່ນ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕ້ອງສະໜັບສະໜູນ ແລະ ໃຫ້ການຊ່ວຍເຫຼືອທາງດ້ານການເງິນ ແລະ ວັດຖຸປະກອນ ທີ່ຈໍາເປັນແກ່ເດັກດ້ອຍໂອກາດ, ເດັກທີ່ຢູ່ເຂດຫ່າງໄກສອກຫຼີກ ແລະ ເດັກທີ່ມາຈາກຄອບຄົວທຸກຍາກ ລວມທັງການປະຕິບັດນະໂຍບາຍ ຍົກເວັ້ນ ຫຼື ຫຼຸດຜ່ອນ ຄ່າທໍານຽມ ແລະ ຄ່າໃຊ້ຈ່າຍ ໃນການຮຽນ.

ການສຶກສາສໍາລັບເດັກດັ່ງກ່າວ ຢ່າງໜ້ອຍໃຫ້ຮຽນຈົບຊັ້ນມັດທະຍົມສຶກສາຕອນຕົ້ນ ແລະ ຝຶກອົບຮົມວິຊາຊີບ.

**ມາດຕາ 24 (ປັບປຸງ) ການສຶກສາສໍາລັບເດັກພິການ**

ເດັກພິການ ມີສິດໄດ້ຮັບການສຶກສາ ແລະ ການຝຶກອົບຮົມວິຊາຊີບ ປາສະຈາກການຈໍາແນກໂດຍຜ່ານນະໂຍບາຍການສຶກສາສໍາລັບທຸກຄົນ.

ຂະແໜງການສຶກສາທິການ ແລະ ກິລາ, ຂະແໜງການອື່ນ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ສ້າງເງື່ອນໄຂ ແລະ ສະພາບແວດລ້ອມທີ່ເອື້ອອໍານວຍ ໃນການຮຽນ-ການສອນໃຫ້ແກ່ເດັກພິການ ທີ່ເໝາະສົມກັບສະພາບຕົວຈິງ ພ້ອມທັງແກ້ໄຂບັນດາອຸປະສັກ ທັງພາຍໃນ ແລະ ພາຍນອກ ສະຖານການສຶກສາ, ປະຕິບັດນະໂຍບາຍ ຍົກເວັ້ນ ຫຼື ຫຼຸດຜ່ອນ ຄ່າທໍານຽມ ແລະ ຄ່າໃຊ້ຈ່າຍ ໃນການຮຽນ ໂດຍອີງໃສ່ຈຸດພິເສດ ແລະ ຄວາມແຕກຕ່າງຂອງເດັກພິການ.

**ມາດຕາ 25 (ປັບປຸງ) ການສຶກສາສໍາລັບເດັກທີ່ຕິດເຊື້ອພະຍາດຕິດຕໍ່ຮ້າຍແຮງ**

ຂະແໜງການສຶກສາທິການ ແລະ ກິລາ, ຂະແໜງການສາທາລະນະສຸກ, ຂະແໜງການອື່ນ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕ້ອງສ້າງເງື່ອນໄຂສໍາລັບເດັກທີ່ຕິດເຊື້ອພະຍາດຕິດຕໍ່ຮ້າຍແຮງ ໃຫ້ໄດ້ຮັບການປິ່ນປົວເພື່ອສາມາດສຶກສາຮຽນຮ່ວມກັບເດັກທົ່ວໄປ ແລະ ເຂົ້າຮ່ວມກິດຈະກໍາຕ່າງໆ ໃນໂຮງຮຽນໂດຍບໍ່ມີການຈໍາແນກ.

## ໝວດທີ 2
## ການມີສ່ວນຮ່ວມຂອງເດັກ

**ມາດຕາ 26 (ປັບປຸງ) ການມີສ່ວນຮ່ວມຂອງເດັກໃນການເຄື່ອນໄຫວກິດຈະກໍາ**

ເດັກທຸກຄົນ ມີສິດເຂົ້າຮ່ວມໃນການເຄື່ອນໄຫວກິດຈະກໍາ ທີ່ເປັນການພັດທະນາທາງດ້ານ ຮ່າງກາຍ, ຈິດໃຈ ແລະ ມັນສະໝອງ ເຊັ່ນ ກິດຈະກໍາທາງດ້ານການສຶກສາ, ວັດທະນະທໍາ-ສັງຄົມ, ສິລະປະ, ວັນນະຄະດີ, ກິລາ-ກາຍຍະກໍາ ແລະ ກິດຈະກໍາອື່ນ.

ຂະແໜງການສຶກສາທິການ ແລະ ກິລາ, ຂະແໜງການຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ, ຂະແໜງການອື່ນ, ອົງການ, ອົງການປົກຄອງທ້ອງຖິ່ນ, ສະຖານການສຶກສາ ແລະ ພາກສ່ວນທີ່ກ່ຽວຂ້ອງ ມີຄວາມຮັບຜິດຊອບໃນການວາງແຜນ ແລະ ຈັດສະຖານທີ່ສໍາລັບກິດຈະກໍາທີ່ໄດ້ກໍານົດໄວ້ໃນວັກທີໜຶ່ງຂອງມາດຕານີ້.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ປະກອບສ່ວນເຂົ້າໃນການຈັດກິດຈະກໍາ ສໍາລັບເດັກ ຕາມເງື່ອນໄຂຂອງຕົນ.

**ມາດຕາ 27 (ປັບປຸງ) ການມີສ່ວນຮ່ວມຂອງເດັກໃນການປະດິດສ້າງ**

ເດັກທຸກຄົນ ມີສິດໃນການປະດິດສ້າງ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ຕ້ອງສົ່ງເສີມເດັກທຸກຄົນ ໃຫ້ມີການປະດິດສ້າງ ດ້ວຍການສະແດງຜົນງານດ້ານຕ່າງໆຂອງເດັກ ທີ່ເປັນປະໂຫຍດ ແລະ ເປັນແບບຢ່າງທີ່ດີໃຫ້ແກ່ເດັກຜູ້ອື່ນ.

**ມາດຕາ 28 (ປັບປຸງ) ການມີສ່ວນຮ່ວມຂອງເດັກໃນການຕົກລົງບັນຫາ**

ເດັກທຸກຄົນ ມີສິດປະກອບຄຳເຫັນ ໃນການຕົກລົງບັນຫາຕ່າງໆ ທີ່ພົວພັນກັບອະນາຄົດ ແລະ ຊາຕາກຳຂອງຕົນ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ຕ້ອງອຳນວຍຄວາມສະດວກໃຫ້ແກ່ເດັກ ໄດ້ປະກອບຄຳເຫັນ ແລະ ພິຈາລະນາຄຳເຫັນດັ່ງກ່າວ ຕາມເກນອາຍຸ ແລະ ຄວາມສາມາດຂອງເດັກ.

# ພາກທີ IV
# ເດັກທີ່ຕ້ອງປົກປ້ອງພິເສດ
## ໝວດທີ 1
## ການປົກປ້ອງ ແລະ ຊ່ວຍເຫຼືອເດັກທີ່ຕ້ອງປົກປ້ອງພິເສດ

**ມາດຕາ 29 (ປັບປຸງ) ການກຳນົດວິທີການປົກປ້ອງ ແລະ ຊ່ວຍເຫຼືອເດັກ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫາກໄດ້ຮູ້, ໄດ້ເຫັນກ່ຽວກັບເຫດການ ທີ່ເຮັດໃຫ້ເດັກຕົກ ຢູ່ໃນຄວາມສ່ຽງ ທີ່ຈະພາໃຫ້ເປັນເດັກທີ່ຕ້ອງປົກປ້ອງພິເສດ ຕ້ອງແຈ້ງ ຫຼື ລາຍງານເຫດການ ຕໍ່ ຄະນະກຳມະການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ແລະ/ຫຼື ຕໍ່ ອົງການສືບສວນ-ສອບສວນ ໂດຍດ່ວນ.

ພາຍຫຼັງໄດ້ພົບເຫັນເດັກ ຫຼື ຮັບລາຍງານວ່າ ມີເດັກທີ່ຕ້ອງປົກປ້ອງພິເສດແລ້ວ ຄະນະກຳມະການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ແລະ/ຫຼື ອົງການສືບສວນ-ສອບສວນ ຕ້ອງວາງແຜນການ, ກຳນົດຮູບການ, ມາດຕະການ ແລະ ວິທີການຊ່ວຍເຫຼືອ ທີ່ຈຳເປັນແກ່ເດັກ.

**ມາດຕາ 30 (ປັບປຸງ) ມາດຕະການປົກປ້ອງຮີບດ່ວນ**

ເມື່ອໄດ້ພົບເຫັນເດັກ ຫຼື ຮັບລາຍງານວ່າ ມີເດັກທີ່ຕ້ອງປົກປ້ອງພິເສດ ຄະນະກຳມະການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ແລະ/ຫຼື ອົງການສືບສວນ-ສອບສວນ ຕ້ອງພິຈາລະນານຳໃຊ້ມາດຕະການປົກປ້ອງຮີບດ່ວນ ເພື່ອເອົາເດັກອອກຈາກໄພອັນຕະລາຍ ດັ່ງນີ້:

1. ກວດກາສະຖານທີ່ ທີ່ສົງໄສວ່າມີເດັກທີ່ຕ້ອງປົກປ້ອງພິເສດ;
2. ເອົາເດັກອອກຈາກການຄຸ້ມຄອງຂອງ ພໍ່ ແມ່, ຜູ້ປົກຄອງ ຫຼື ສະຖານທີ່ເບິ່ງແຍງ ແລະ ລ້ຽງດູເດັກ ແລ້ວນຳເອົາເດັກໄປໄວ້ໃນສະຖານທີ່ປອດໄພຊົ່ວຄາວ ຫຼື ສູນຮັບຕ້ອນເດັກ ຖ້າ ພໍ່ ແມ່, ຜູ້ປົກຄອງ ຫຼື ສະຖານທີ່ເບິ່ງແຍງ ແລະ ລ້ຽງດູເດັກ ນັ້ນ ຫາກມີບັນຫາ;
3. ເອົາເດັກໄປ ກວດ, ປິ່ນປົວ ຫຼື ຟື້ນຟູ ສຸຂະພາບ ຕາມແຕ່ລະກໍລະນີ;
4. ນຳໃຊ້ມາດຕະການອື່ນ ທີ່ເຫັນວ່າຈຳເປັນ.

**ມາດຕາ 31 (ປັບປຸງ) ການປົກປ້ອງ ແລະ ຊ່ວຍເຫຼືອເດັກ**

ການປົກປ້ອງ ແລະ ຊ່ວຍເຫຼືອເດັກ ໃຫ້ປະຕິບັດ ດັ່ງນີ້:

1. ເອົາເດັກເຂົ້າຢູ່ໃນສູນຮັບຕ້ອນ ຫຼື ສະຖານທີ່ພັກເຊົາຊົ່ວຄາວທີ່ປອດໄພ;
2. ໃຫ້ຄຳປຶກສາ, ຮັກສາສຸຂະພາບ, ສຶກສາຮ່ຳຮຽນ, ຝຶກອົບຮົມວິຊາຊີບ ແລະ ໃຫ້ການບໍລິການອື່ນທີ່ຈຳເປັນ ເພື່ອຊ່ວຍຟື້ນຟູສະພາບທາງດ້ານ ຮ່າງກາຍ, ຈິດໃຈ ແລະ ມັນສະໝອງ ຂອງເດັກ ໃຫ້ສາມາດກັບຄືນສູ່ສັງຄົມໄດ້;
3. ຊອກຫາພໍ່ ແມ່ ຫຼື ຜູ້ປົກຄອງ ແລະ ສົ່ງເດັກຄືນໃຫ້ແກ່ຄອບຄົວ;
4. ໃຫ້ການຊ່ວຍເຫຼືອ ແລະ ຄຳແນະນຳແກ່ພໍ່ ແມ່ ຫຼື ຜູ້ປົກຄອງເດັກ ໃນການປະຕິບັດພັນທະລ້ຽງດູ ແລະ ສຶກສາອົບຮົມລູກໃຫ້ດີ, ຊ່ວຍເຫຼືອໃນການສ້າງລາຍໄດ້ ແລະ ອື່ນທີ່ຈຳເປັນ;

5. ຕິດຕາມ ແລະ ຢ້ຽມຢາມສະຖານທີ່ເດັກອາໄສຢູ່ເປັນປະຈຳ ເພື່ອກວດກາຄຸນນະພາບຂອງການເບິ່ງແຍງ ແລະ ລ້ຽງດູເດັກຂອງ ພໍ່ ແມ່ ຫຼື ຜູ້ປົກຄອງ;

6. ໃຫ້ການປົກປ້ອງ ແລະ ຊ່ວຍເຫຼືອອື່ນ ທີ່ເຫັນວ່າຈຳເປັນ.

**ມາດຕາ 32 (ປັບປຸງ) ທາງເລືອກສຳລັບການເບິ່ງແຍງ ແລະ ລ້ຽງດູເດັກ**

ການເບິ່ງແຍງ ແລະ ລ້ຽງດູເດັກ ມີທາງເລືອກ ດັ່ງນີ້:

1. ການສົ່ງເດັກກັບຄືນສູ່ຄອບຄົວ;
2. ການເບິ່ງແຍງ ແລະ ລ້ຽງດູເດັກ ໂດຍຍາດພີ່ນ້ອງ;
3. ການເບິ່ງແຍງ ແລະ ລ້ຽງດູເດັກ ໂດຍບຸກຄົນ ຫຼື ສະຖານທີ່ອື່ນ.

ໃນການເບິ່ງແຍງ ແລະ ລ້ຽງດູເດັກ ມີເງື່ອນໄຂ ດັ່ງນີ້:

1. ຖືຜົນປະໂຫຍດສູງສຸດຂອງເດັກ ເປັນປັດໄຈຕົ້ນຕໍໃນການພິຈາລະນາ;
2. ແຕ່ງຕັ້ງຜູ້ປົກຄອງ ໂດຍເລືອກຈາກສະມາຊິກຄອບຄົວ ຫຼື ຍາດພີ່ນ້ອງໃກ້ຊິດຂອງເດັກ ເປັນອັນດັບທຳອິດ, ເວັ້ນເສຍແຕ່ຫາກຂັດກັບຜົນປະໂຫຍດສູງສຸດຂອງເດັກ;
3. ມີຄວາມຈຳເປັນໃນການປົກປັກຮັກສາ ວັດທະນະທຳ, ພາສາ, ສາສະໜາ ແລະ ເຊື້ອຊາດຂອງເດັກ;
4. ມີຄຳເຫັນຂອງເດັກ ຊຶ່ງຕ້ອງພິຈາລະນາ ຕາມເກນອາຍຸ ແລະ ຄວາມສາມາດຂອງເດັກ.

**ມາດຕາ 33 (ໃໝ່) ການສົ່ງເດັກກັບຄືນສູ່ຄອບຄົວ**

ການສົ່ງເດັກກັບຄືນສູ່ຄອບຄົວ ເປັນທາງເລືອກທຳອິດ ຊຶ່ງຄະນະກຳມະການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຕ້ອງປະເມີນສະພາບ ຮ່າງກາຍ, ຈິດໃຈ ແລະ ມັນສະໝອງ ຂອງເດັກ ພ້ອມທັງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອປະເມີນຄວາມປອດໄພ, ສະພາບຄວາມພ້ອມຂອງຄອບຄົວ ແລະ ຊຸມຊົນ ກ່ອນສົ່ງເດັກກັບຄືນສູ່ຄອບຄົວ.

ພາຍຫຼັງການສົ່ງເດັກກັບຄືນສູ່ຄອບຄົວແລ້ວ ຕາໜ່າງປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຕ້ອງດຳເນີນການຕິດຕາມສະພາບຊີວິດການເປັນຢູ່ຂອງເດັກ ຢ່າງເປັນປະຈຳ.

**ມາດຕາ 34 (ໃໝ່) ການເບິ່ງແຍງ ແລະ ລ້ຽງດູເດັກ ໂດຍຍາດພີ່ນ້ອງ**

ການເບິ່ງແຍງ ແລະ ລ້ຽງດູເດັກ ໂດຍຍາດພີ່ນ້ອງ ເປັນທາງເລືອກໜຶ່ງ ໃນກໍລະນີບໍ່ສາມາດສົ່ງເດັກກັບຄືນສູ່ຄອບຄົວ ຊຶ່ງຄະນະກຳມະການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຕ້ອງສະເໜີນາຍບ້ານ ເພື່ອແຕ່ງຕັ້ງຍາດພີ່ນ້ອງເປັນຜູ້ປົກຄອງ.

ການສົ່ງເດັກໄປຢູ່ໃນການເບິ່ງແຍງ ແລະ ລ້ຽງດູຂອງຍາດພີ່ນ້ອງນັ້ນ ຄະນະກຳມະການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຕ້ອງປະເມີນສະພາບ ຮ່າງກາຍ, ຈິດໃຈ ແລະ ມັນສະໝອງ ຂອງເດັກ ພ້ອມທັງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອປະເມີນຄວາມປອດໄພ, ສະພາບຄວາມພ້ອມຂອງຍາດພີ່ນ້ອງ ແລະ ຊຸມຊົນ ກ່ອນສົ່ງເດັກໃຫ້ຍາດພີ່ນ້ອງເບິ່ງແຍງ ແລະ ລ້ຽງດູ.

ພາຍຫຼັງການສົ່ງເດັກໄປຢູ່ໃນການເບິ່ງແຍງ ແລະ ລ້ຽງດູຂອງຍາດພີ່ນ້ອງແລ້ວ ຕາໜ່າງປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ບ່ອນເດັກຖືກສົ່ງໄປຢູ່ນັ້ນ ຕ້ອງດຳເນີນການຕິດຕາມສະພາບຊີວິດການເປັນຢູ່ຂອງເດັກຢ່າງເປັນປະຈຳ.

**ມາດຕາ 35 (ໃໝ່) ການເບິ່ງແຍງ ແລະ ລ້ຽງດູເດັກໂດຍບຸກຄົນອື່ນ ຫຼື ສະຖານທີ່ອື່ນ**

ການເບິ່ງແຍງ ແລະ ລ້ຽງດູເດັກໂດຍບຸກຄົນ ຫຼື ສະຖານທີ່ອື່ນ ເປັນທາງເລືອກສຸດທ້າຍ ໃນກໍລະນີບໍ່ສາມາດສົ່ງເດັກກັບຄືນສູ່ຄອບຄົວ ແລະ ໄປຢູ່ນຳຍາດພີ່ນ້ອງ ຊຶ່ງຄະນະກຳມະການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ

ຕ້ອງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອພິຈາລະນາກ່ຽວກັບ ການແຕ່ງຕັ້ງບຸກຄົນອື່ນເປັນຜູ້ປົກຄອງ, ການເອົາເດັກໄປເປັນລູກລ້ຽງ ຫຼື ການເອົາເດັກໄປຢູ່ໃນສະຖານ ຫຼື ສູນ ເບິ່ງແຍງ ແລະ ລ້ຽງດູເດັກ ຕາມແຕ່ລະກໍລະນີ.

## ໝວດທີ 2
## ການສະກັດກັ້ນ, ການປິ່ນປົວ, ຟື້ນຟູສຸຂະພາບ ແລະ ການຝຶກວິຊາຊີບ

**ມາດຕາ 36 (ປັບປຸງ) ການສະກັດກັ້ນການຕິດສິ່ງເສບຕິດ**

ຂະແໜງການປ້ອງກັນຄວາມສະຫງົບ, ຂະແໜງການສາທາລະນະສຸກ, ຂະແໜງການສຶກສາທິການ ແລະ ກິລາ, ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ຂະແໜງການອື່ນ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕ້ອງສ້າງແຜນການ, ກິດຈະກຳ ແລະ ກົນໄກໃນການເຄື່ອນໄຫວສະກັດກັ້ນສິ່ງເສບຕິດ, ໂຄສະນາ, ປູກຈິດສຳນຶກ, ສະໜອງຂໍ້ມູນ ຂ່າວສານ ກ່ຽວກັບຜົນຮ້າຍຂອງການເສບຢາເສບຕິດ, ການດື່ມເຄື່ອງດື່ມທີ່ມີທາດເຫຼົ້າ, ການຊົມໃຊ້ຢາສູບ, ຢາສູບໄຟຟ້າ ຫຼື ສິ່ງມຶນເມົາອື່ນ ພ້ອມທັງຊຸກຍູ້ໃຫ້ສັງຄົມ ແລະ ຄອບຄົວ ເຂົ້າຮ່ວມຢ່າງຕັ້ງໜ້າ.

**ມາດຕາ 37 (ປັບປຸງ) ການປິ່ນປົວ, ຟື້ນຟູ ສຸຂະພາບ ແລະ ການຝຶກວິຊາຊີບ ເດັກຕິດຢາເສບຕິດ**

ຂະແໜງການສາທາລະນະສຸກ, ຂະແໜງການປ້ອງກັນຄວາມສະຫງົບ, ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ, ຂະແໜງການສຶກສາທິການ ແລະ ກິລາ, ຂະແໜງການອື່ນ, ອົງການ, ອົງການປົກຄອງທ້ອງຖິ່ນ, ຄອບຄົວ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕ້ອງສ້າງເງື່ອນໄຂ ແລະ ດຳເນີນການປິ່ນປົວ, ຟື້ນຟູສຸຂະພາບ ພ້ອມທັງສຶກສາອົບຮົມເດັກຕິດຢາເສບຕິດ ໄປຄຽງຄູ່ກັບການຝຶກວິຊາຊີບ.

ສຳລັບ ການ ປິ່ນປົວ, ຟື້ນຟູສຸຂະພາບ ແລະ ການຝຶກວິຊາຊີບ ເດັກຕິດຢາເສບຕິດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ V
## ການແກ້ໄຂຄະດີເດັກ

**ມາດຕາ 38 (ປັບປຸງ) ເດັກກະທຳຜິດ**

ເດັກທີ່ມີອາຍຸຕໍ່າກວ່າ ສິບຫ້າປີ ໃນເວລາກະທຳຜິດ ຈະບໍ່ມີຄວາມຮັບຜິດຊອບທາງອາຍາ.

ເດັກທີ່ມີອາຍຸແຕ່ ສິບຫ້າປີ ຂຶ້ນໄປ ແຕ່ບໍ່ເຖິງ ສິບແປດປີ ໃນເວລາກະທຳຜິດ ຈະມີຄວາມຮັບຜິດຊອບທາງອາຍາ ຕາມກົດໝາຍ.

**ມາດຕາ 39 (ປັບປຸງ) ສິດຂອງເດັກກະທຳຜິດ**

ໃນການດຳເນີນຄະດີອາຍາ ເດັກກະທຳຜິດ ມີສິດ ດັ່ງນີ້:

1. ໄດ້ຮັບການພິຈາລະນານອກຂະບວນການຍຸຕິທຳ ຊຶ່ງການກະທຳຜິດນັ້ນ ກົດໝາຍກຳນົດໂທດຕັດອິດສະລະພາບຕໍ່າກວ່າ ສາມປີ;
2. ໄດ້ຮັບຊາບຂໍ້ກ່າວຫາ ແລະ ສິດໃນການຕໍ່ສູ້ຄະດີ;
3. ໄດ້ຊີ້ແຈງເຫດ ແລະ ຜົນ ໂດຍມີ ພໍ່ ແມ່ ຫຼື ຜູ້ປົກຄອງ ແລະ ທະນາຍຄວາມ, ນັກສັງຄົມສົງເຄາະ, ນັກຈິດຕະວິທະຍາ ຫຼື ຜູ້ປົກປ້ອງຕາມກົດໝາຍເຂົ້າຮ່ວມນຳ ໃນທຸກຂັ້ນຕອນຂອງການດຳເນີນຄະດີ;
4. ໄດ້ຮັບການຊ່ວຍເຫຼືອທາງດ້ານກົດໝາຍ ຈາກທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ ທີ່ຖືກຕ້ອງຕາມກົດໝາຍ;

5. ໄດ້ຮັບການປະຕິບັດດ້ວຍວິທີການທີ່ເປັນມິດຕໍ່ເດັກ ຢ່າງເໝາະສົມ ໂດຍບໍ່ມີການບັງຄັບນາບຂູ່ ແລະ ການໃຊ້ຄຳເວົ້າທີ່ຫຍາບຊ້າ ໃນທຸກຂັ້ນຕອນຂອງການດຳເນີນຄະດີອາຍາ;

6. ໄດ້ຮັບການພິຈາລະນາຄະດີຢ່າງວ່ອງໄວ, ໂປ່ງໃສ ແລະ ເປັນທຳ;

7. ໄດ້ຮັບການປົກປ້ອງ ແລະ ຄຸ້ມຄອງຄວາມປອດໄພຈາກພາກສ່ວນທີ່ກ່ຽວຂ້ອງ;

8. ໄດ້ຮັບການປົກປ້ອງ ທາງດ້ານຄວາມລັບ ເປັນຕົ້ນ ກ່ຽວກັບປະຫວັດ, ຮູບຖ່າຍ ແລະ ຂໍ້ມູນສ່ວນຕົວ;

9. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 40 (ໃໝ່) ການແກ້ໄຂຄະດີເດັກ**

ການແກ້ໄຂຄະດີເດັກ ໃຫ້ດຳເນີນດ້ວຍ ສອງຮູບການ ດັ່ງນີ້:

1. ການແກ້ໄຂຄະດີເດັກທາງດ້ານບໍລິຫານ;
2. ການແກ້ໄຂຄະດີເດັກຕາມຂະບວນການຍຸຕິທຳ.

ການແກ້ໄຂຄະດີເດັກທາງດ້ານບໍລິຫານ ແມ່ນ ການແກ້ໄຂດ້ວຍໜ່ວຍໄກ່ເກ່ຍຄະດີເດັກ ຂັ້ນບ້ານ, ຫ້ອງການຍຸຕິທຳຂັ້ນເມືອງ, ໜ່ວຍງານສືບສວນ-ສອບສວນຄະດີເດັກ ແລະ ໜ່ວຍງານໄອຍະການເດັກ.

ການແກ້ໄຂຄະດີເດັກຕາມຂະບວນການຍຸຕິທຳ ແມ່ນ ການດຳເນີນການສືບສວນ-ສອບຖາມ, ການສຳພາດ, ການໄກ່ເກ່ຍ ກ່ຽວກັບການໃຊ້ແທນຄ່າເສຍຫາຍທາງແພ່ງ, ການນຳໃຊ້ມາດຕະການຕ່າງໆ ຂອງໜ່ວຍງານສືບສວນ-ສອບສວນຄະດີເດັກ, ໜ່ວຍງານໄອຍະການເດັກ ແລະ ການພິຈາລະນາຕັດສິນຂອງສານ.

ສຳລັບການແກ້ໄຂຄະດີເດັກ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການດຳເນີນຄະດີເດັກ ແລະ ລະບຽບການທີ່ກ່ຽວຂ້ອງ.

# ພາກທີ VI
# ການສ້າງຄວາມເຂັ້ມແຂງ ແລະ ຄວາມຮັບຜິດຊອບ ຕໍ່ວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ

## ໝວດທີ 1
## ການສ້າງຄວາມເຂັ້ມແຂງຕໍ່ວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ

**ມາດຕາ 41 (ໃໝ່) ການສ້າງຄວາມເຂັ້ມແຂງຕໍ່ວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ**

ການສ້າງຄວາມເຂັ້ມແຂງ ຕໍ່ວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ມີ ດັ່ງນີ້:

1. ການປູກຈິດສຳນຶກກ່ຽວກັບການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;
2. ການບໍ່ໃຫ້ມີການຈຳແນກເດັກ;
3. ການຮັບປະກັນການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ.

**ມາດຕາ 42 (ໃໝ່) ການປູກຈິດສຳນຶກກ່ຽວກັບການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ**

ການປູກຈິດສຳນຶກກ່ຽວກັບການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ສາມາດດຳເນີນດ້ວຍຫຼາຍຮູບການ ແລະ ວິທີການ ເປັນຕົ້ນ ການໂຄສະນາເຜີຍແຜ່ກົດໝາຍ ແລະ ຝຶກອົບຮົມ, ສຶກສາອົບຮົມ, ເຜີຍແຜ່ຄວາມຮູ້ ຄວາມເຂົ້າໃຈກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ໃຫ້ກວ້າງຂວາງ ແລະ ເລິກເຊິ່ງ, ເຊື່ອມສານວຽກງານດັ່ງກ່າວເຂົ້າໃນທຸກຂົງເຂດວຽກງານ, ກຳນົດເຂົ້າໃນຫຼັກສູດການຮຽນ-ການສອນ ພ້ອມທັງສ້າງກິດຈະກຳຕ່າງໆເພື່ອປັບປ່ຽນພຶດຕິກຳ, ວັດທະນະທຳ, ຮີດຄອງປະເພນີ, ຄວາມເຊື່ອຖື, ທັດສະນະຄະຕິທີ່ເປັນການຈຳແນກ ແລະ ກົດໜ່ວງເດັກ.

**ມາດຕາ 43 (ປັບປຸງ) ການບໍ່ໃຫ້ມີການຈຳແນກເດັກ**

ເດັກທຸກຄົນ ມີຄວາມສະເໝີພາບໃນທຸກດ້ານ ໂດຍບໍ່ມີການ ຈຳແນກ, ແບ່ງແຍກ, ກີດກັນ, ຈຳກັດການເຂົ້າຮ່ວມ, ເລືອກປະຕິບັດ, ປະຕິເສດ, ບໍ່ຍອມຮັບ ຫຼື ບໍ່ຖືສຳຄັນບົດບາດ, ລັກສະນະຂອງເດັກ.

**ມາດຕາ 44 (ໃໝ່) ການຮັບປະກັນການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ**

ການຮັບປະກັນການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ມີ ດັ່ງນີ້:

1. ຈັດບຸລິມະສິດໃຫ້ແກ່ວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;
2. ຮັບປະກັນການປົກປ້ອງເດັກທີ່ຕ້ອງປົກປ້ອງພິເສດ ແລະ ເດັກທີ່ມີຄວາມສ່ຽງ;
3. ໃຫ້ຄວາມຮູ້ແກ່ເດັກກ່ຽວກັບສິດທິຂອງຕົນ;
4. ສ້າງເງື່ອນໄຂໃຫ້ເດັກໄດ້ຮັບການອຸດໜູນ ແລະ ນະໂຍບາຍຕ່າງໆ;
5. ສ້າງສະພາບແວດລ້ອມທີ່ປອດໄພໃຫ້ແກ່ການດຳລົງຊີວິດຂອງເດັກ.

## ໝວດທີ 2
## ຄວາມຮັບຜິດຊອບຕໍ່ວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ

**ມາດຕາ 45 (ໃໝ່) ຄວາມຮັບຜິດຊອບຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ**

ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ມີຄວາມຮັບຜິດຊອບຕໍ່ວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ດ້ວຍການພິຈາລະນາ, ຮັບຮອງເອົາກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ; ຄົ້ນຄວ້າ, ພິຈາລະນາ ແລະ ຕົກລົງບັນຫາສຳຄັນ ແລະ ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ.

**ມາດຕາ 46 (ປັບປຸງ) ຄວາມຮັບຜິດຊອບຂອງລັດຖະບານ**

ລັດຖະບານ ມີຄວາມຮັບຜິດຊອບຕໍ່ວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຕົນ ດັ່ງນີ້:

1. ສ້າງ ນະໂຍບາຍ, ວິໄສທັດ, ແຜນຍຸດທະສາດ, ແຜນດຳເນີນງານແຫ່ງຊາດ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ແລະ ຈັດສັນງົບປະມານ ໃຫ້ແກ່ການຈັດຕັ້ງປະຕິບັດ;
2. ສ້າງ, ເຂົ້າຮ່ວມ, ຕີຄວາມໝາຍ ແລະ ຈັດຕັ້ງປະຕິບັດ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ;
3. ຈັດຕັ້ງ, ຊີ້ນຳ ແລະ ຕິດຕາມ ກວດກາ ການຮັບໃຊ້ ແລະ ການແກ້ໄຂຄຳສະເໜີຂອງປະຊາຊົນ ໃນວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;
4. ຊຸກຍູ້, ຕິດຕາມ ກວດກາ, ປະເມີນຜົນ, ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຕໍ່ ສະພາແຫ່ງຊາດ;
5. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 47 (ໃໝ່) ຄວາມຮັບຜິດຊອບຂອງກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ**

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີຄວາມຮັບຜິດຊອບ ແລະ ເປັນເຈົ້າການຕໍ່ວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ໂດຍຜ່ານກົນໄກການປະສານງານ ແລະ ຊີ້ນຳວຽກງານ ດັ່ງກ່າວ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຕົນ ດັ່ງນີ້:

1. ສ້າງແຜນການ, ແຜນງານ, ໂຄງການ ແລະ ກິດຈະກຳ ເພື່ອຈັດຕັ້ງປະຕິບັດວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;

2. ໂຄສະນາ ເຜີຍແຜ່, ສຶກສາອົບຮົມ, ໃຫ້ຄວາມຮູ້ ແລະ ສ້າງຄວາມເຂົ້າໃຈ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;

3. ສ້າງຄວາມເຂັ້ມແຂງໃຫ້ກົມກອງ, ພະແນກການ ແລະ ໜ່ວຍງານ ທີ່ສັງກັດຢູ່ໃນການຈັດຕັ້ງຂອງຕົນ ເພື່ອໃຫ້ສາມາດຈັດຕັ້ງປະຕິບັດວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;

4. ໃຫ້ການຮ່ວມມື, ສະໜອງ ຂໍ້ມູນ ຂ່າວສານ ແລະ ປະສານສົມທົບກັບ ຄະນະກຳມະການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຂັ້ນຂອງຕົນ ໃນການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;

5. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 48 (ປັບປຸງ) ຄວາມຮັບຜິດຊອບຂອງສັງຄົມ, ຊຸມຊົນ ແລະ ຄອບຄົວ**

ສັງຄົມ, ຊຸມຊົນ ແລະ ຄອບຄົວ ມີຄວາມຮັບຜິດຊອບຕໍ່ວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ດັ່ງນີ້:

1. ເຜີຍແຜ່ ແລະ ສຶກສາອົບຮົມ ສະມາຊິກຂອງຕົນ ໃຫ້ເຄົາລົບນັບຖື, ໃຫ້ກຽດຊຶ່ງກັນ ແລະ ກັນ, ສົ່ງເສີມ ຮີດຄອງປະເພນີອັນດີງາມຂອງຊາດ ແລະ ຂອງເຜົ່າ;

2. ເຂົ້າຮ່ວມໃນທຸກວຽກງານ ກ່ຽວກັບການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;

3. ຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງ, ທຸກພຶດຕິກຳທີ່ເປັນການຈຳແນກ ໃນການເຂົ້າຮ່ວມ ການເຄື່ອນໄຫວວຽກງານຕ່າງໆຂອງເດັກ;

4. ຈຳກັດ ແລະ ລົບລ້າງ ຄວາມເຊື່ອຖື ແລະ ຮີດຄອງປະເພນີ ທີ່ເປັນການກີດໜ່ວງຄວາມກ້າວໜ້າຂອງເດັກ;

5. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 49 (ປັບປຸງ) ຄວາມຮັບຜິດຊອບຂອງເດັກ**

ເດັກທຸກຄົນ ມີຄວາມຮັບຜິດຊອບ ດັ່ງນີ້:

1. ເຄົາລົບນັບຖືພໍ່ ແມ່, ຜູ້ປົກຄອງ, ສະມາຊິກໃນຄອບຄົວ, ຄູອາຈານ, ທ່ານຜູ້ນຳ, ຜູ້ອາຍຸສູງ, ຜູ້ອາວຸໂສ, ເຄົາລົບສິດຂອງຄົນອື່ນ;

2. ຊ່ວຍເຫຼືອພໍ່ ແມ່, ຄອບຄົວ, ໝູ່ເພື່ອນ, ຜູ້ອາຍຸສູງ, ຜູ້ອາວຸໂສ ແລະ ຄົນພິການ ຕາມຄວາມສາມາດ;

3. ດຸໝັ່ນຮໍ່າຮຽນຢ່າງໜ້ອຍໃຫ້ຮຽນຈົບຊັ້ນມັດທະຍົມສຶກສາຕອນຕົ້ນ, ເຄົາລົບ ແລະ ປະຕິບັດ ກົດລະບຽບ ຂອງໂຮງຮຽນຢ່າງເຂັ້ມງວດ;

4. ຮັກສາສຸຂະພາບ, ອະນາໄມ, ສິ່ງສາທາລະນະປະໂຫຍດ ແລະ ສິ່ງແວດລ້ອມ;

5. ເຄົາລົບ ແລະ ປະຕິບັດ ລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການຕ່າງໆຂອງລັດ;

6. ສັດຊື່ບໍລິສຸດ, ຮັກບ້ານເກີດເມືອງນອນ, ຮັກປະເທດຊາດ, ຮັກຜູ້ມີຄຸນງາມຄວາມດີຕໍ່ປະເທດຊາດ, ນັບຖືວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງ ຊາດ ແລະ ເຜົ່າ;

7. ປະກອບສ່ວນເຂົ້າໃນກິດຈະກຳທາງສັງຄົມ ບົນພື້ນຖານຄວາມສາມາດຂອງຕົນ;

8. ພັດທະນາຕົນເອງທາງດ້ານ ຮ່າງກາຍ ແລະ ຈິດໃຈ ເພື່ອໃຫ້ມີສຸຂະພາບດີ ແລະ ມີຄວາມເບີກບານ;

9. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ VII
## ລະບົບ ຂໍ້ມູນ ຂ່າວສານ ການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ

**ມາດຕາ 50 (ໃໝ່) ລະບົບ ຂໍ້ມູນ ຂ່າວສານ ການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ**

ລະບົບ ຂໍ້ມູນ ຂ່າວສານ ການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ແມ່ນ ບ່ອນເກັບກຳ, ສັງລວມ, ເກັບຮັກສາ, ວິເຄາະ, ວິໄຈ, ຕິດຕາມ, ກວດກາ, ຈັດເປັນລະບົບ ແລະ ສະໜອງ ຂໍ້ມູນ ຂ່າວສານ ໃນຮູບແບບເຈ້ຍ ແລະ ຮູບແບບເອເລັກໂຕຣນິກ.

**ມາດຕາ 51 (ໃໝ່) ການສ້າງລະບົບ ຂໍ້ມູນ ຂ່າວສານ**

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສ້າງ, ປັບປຸງ, ຄຸ້ມຄອງ ແລະ ນຳໃຊ້ ລະບົບ ຂໍ້ມູນ ຂ່າວສານ ການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ລວມທັງການສະໜອງ ແລະ ແລກປ່ຽນ ຂໍ້ມູນ ຂ່າວສານ ໂດຍປະສານສົມທົບ ກັບ ກະຊວງອື່ນ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ. ສຳລັບຖານຂໍ້ມູນ ຂອງພາກສ່ວນອື່ນ ໃຫ້ເຊື່ອມຕໍ່ກັບຖານ ຂໍ້ມູນ ຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ.

ພະແນກແຮງງານ ແລະ ສະຫວັດດີການສັງຄົມ ຂັ້ນແຂວງ, ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ ຂັ້ນເມືອງ ຄຸ້ມຄອງ ແລະ ນຳໃຊ້ລະບົບ ຂໍ້ມູນ ຂ່າວສານ ໂດຍປະສານສົມທົບກັບ ພະແນກການ, ຫ້ອງການ ອື່ນ, ລວມທັງ ການສະໜອງ ແລະ ແລກປ່ຽນ ຂໍ້ມູນ ຂ່າວສານ ການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຕາມຄວາມຮັບຜິດຊອບ ຂອງຕົນ.

**ມາດຕາ 52 (ໃໝ່) ການເຂົ້າເຖິງ ແລະ ນຳໃຊ້ ຂໍ້ມູນ ຂ່າວສານ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ພາກລັດ ແລະ ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ສາມາດເຂົ້າເຖິງ ແລະ ນຳໃຊ້ຂໍ້ມູນໃນລະບົບ ຂໍ້ມູນ ຂ່າວສານ ການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ເຂົ້າໃນການເຄື່ອນໄຫວ ວຽກງານຂອງຕົນ.

ການນຳໃຊ້ ຂໍ້ມູນ ຂ່າວສານ ການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຕ້ອງໄດ້ຂໍອະນຸຍາດ ນຳ ຂະແໜງການ ແຮງງານ ແລະ ສະຫວັດດີການສັງຄົມ, ຂະແໜງການອື່ນ ແລະ ອົງການທີ່ກ່ຽວຂ້ອງ ໂດຍສອດຄ່ອງກັບກົດໝາຍ.

## ພາກທີ VIII
## ກອງທຶນປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ

**ມາດຕາ 53 (ໃໝ່) ກອງທຶນປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ**

ກອງທຶນປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ແມ່ນ ກອງທຶນຂອງລັດທີ່ສ້າງຕັ້ງຂຶ້ນ ເພື່ອລະດົມ ແລະ ສະສົມທຶນຈາກແຫຼ່ງຕ່າງໆ ແນໃສ່ຮັບປະກັນໃຫ້ມີງົບປະມານພຽງພໍ ແລະ ຍືນຍົງ ນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດ ວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

ກອງທຶນປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຂຽນຫຍໍ້ວ່າ "ກປດ".

ກອງທຶນປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຢູ່ພາຍໃຕ້ການຄຸ້ມຄອງບໍລິຫານຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ.

**ມາດຕາ 54 (ໃໝ່) ແຫຼ່ງກອງທຶນປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ**

ແຫຼ່ງກອງທຶນປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ມີ ດັ່ງນີ້:

1. ງົບປະມານຂອງລັດ;
2. ການປະກອບສ່ວນຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;
3. ລາຍຮັບຈາກການລະດົມທຶນ;
4. ລາຍຮັບອື່ນ ທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 55 (ໃໝ່) ການຄຸ້ມຄອງ ແລະ ນຳໃຊ້ກອງທຶນ**

ການຄຸ້ມຄອງ ແລະ ນຳໃຊ້ກອງທຶນປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຕ້ອງຮັບປະກັນຄວາມໂປ່ງໃສ, ສາມາດກວດສອບໄດ້ ແລະ ສອດຄ່ອງກັບກົດໝາຍທີ່ກ່ຽວຂ້ອງ.

ສຳລັບການຄຸ້ມຄອງ ແລະ ນຳໃຊ້ກອງທຶນປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ IX
## ຂໍ້ຫ້າມ

**ມາດຕາ 56 (ໃໝ່) ຂໍ້ຫ້າມສຳລັບ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ**

ຫ້າມ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ຮັບຜິດຊອບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ສວຍໃຊ້ສິດ, ໜ້າທີ່, ຕຳແໜ່ງ, ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່ ເພື່ອຫາຜົນປະໂຫຍດແກ່ຕົນ, ຄອບຄົວ, ຍາດພີ່ນ້ອງ ແລະ ພັກພວກຂອງຕົນ;
2. ທວງເອົາ, ຂໍເອົາ, ຮັບເອົາສິນບົນ ຈາກ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
3. ປະຕິບັດໜ້າທີ່ດ້ວຍຄວາມປະໝາດ, ເລີ່ນເລີ້, ເມີນເສີຍ, ຂາດຄວາມຮັບຜິດຊອບຕໍ່ການປະຕິບັດໜ້າທີ່;
4. ກົດໜ່ວງ, ຖ່ວງດຶງ ເອກະສານ ໃນການແກ້ໄຂບັນຫາ ກ່ຽວກັບການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;
5. ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່, ທຳຮ້າຍຮ່າງກາຍ ແລະ ນຳໃຊ້ມາດຕະການອື່ນ ທີ່ບໍ່ຖືກຕ້ອງຕາມກົດໝາຍ;
6. ເປີດເຜີຍຄວາມລັບກ່ຽວກັບສະພາບການຕິດເຊື້ອພະຍາດຕິດຕໍ່ຮ້າຍແຮງຂອງເດັກ;
7. ຮຽກເອົາ ຄ່າທຳນຽມ, ຄ່າບໍລິການ ທີ່ບໍ່ຖືກຕ້ອງຕາມກົດໝາຍ;
8. ປອມແປງເອກະສານ, ອອກເອກະສານບໍ່ຖືກຕ້ອງ ຫຼື ທຳລາຍເອກະສານ;
9. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 57 (ປັບປຸງ) ຂໍ້ຫ້າມສຳລັບ ພໍ່ ແມ່, ຜູ້ປົກຄອງ ແລະ ບຸກຄົນອື່ນ**

ຫ້າມ ພໍ່ ແມ່, ຜູ້ປົກຄອງ ແລະ ບຸກຄົນອື່ນ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ຂັດຂວາງບໍ່ໃຫ້ເດັກໄປ ປິ່ນປົວ, ຮັບວັກຊີນກັນພະຍາດ, ສຶກສາຮ່ຳຮຽນ ຫຼື ປະກອບສ່ວນເຂົ້າໃນກິດຈະກຳຕ່າງໆ ທີ່ເປັນການພັດທະນາທາງດ້ານ ຮ່າງກາຍ, ຈິດໃຈ, ມັນສະໝອງ, ຄວາມຮູ້ ແລະ ຄວາມສາມາດຂອງເດັກ;
2. ທຳຮ້າຍຮ່າງກາຍດ້ວຍການ ຂ້ຽນຕີ, ທຸບຕີ, ທໍລະມານ ແລະ ປ້ອຍດ່າຢ່າງຮຸນແຮງຕໍ່ເດັກ;
3. ໃຊ້ຄວາມຮຸນແຮງທຸກຮູບແບບຕໍ່ເດັກ;

4. ປະຈານ ຫຼື ປະລະ, ປະຖິ້ມເດັກ;

5. ຈັດຫາເດັກ ຫຼື ຊັກຊວນເດັກ ຂາຍບໍລິການທາງເພດ;

6. ໃຫ້ເດັກແຕ່ງດອງ;

7. ປະພຶດຕົນທີ່ເປັນແບບຢ່າງອັນບໍ່ດີແກ່ເດັກ;

8. ໃຊ້ເດັກໄປ ຊື້ ຂາຍ, ໂຄສະນາສິ່ງເສບຕິດ, ສິ່ງມຶນເມົາ;

9. ໃຫ້ເດັກເຂົ້າໄປໃຊ້ບໍລິການ ຫຼື ໃຫ້ບໍລິການໃນຫ້ອງບັນເທີງ, ເຮືອນພັກ, ໂຮງແຮມ, ຮ້ານກິນດື່ມ ແລະ ສະຖານທີ່ການພະນັນ;

10. ໃຫ້ເດັກເຂົ້າຫ້ອງບັນເທີງ, ເຮືອນພັກ, ໂຮງແຮມ, ຮ້ານກິນດື່ມຂອງຕົນ ທີ່ບໍລິການປະເພດ ເຫຼົ້າ, ເບຍ ຫຼື ເຄື່ອງດື່ມທີ່ມີສິ່ງມຶນເມົາ;

11. ໃຫ້ເດັກ ດື່ມສິ່ງມຶນເມົາ, ມົ້ວສຸມສິ່ງລາມົກ ແລະ ອະນາຈານ;

12. ຕິດຕັ້ງປ້າຍໂຄສະນາ ເຄື່ອງດື່ມທີ່ມີທາດເຫຼົ້າ, ຢາສູບ ຫຼື ສິ່ງມຶນເມົາອື່ນ ຢູ່ໃກ້ສະຖານການສຶກສາ;

13. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

### ມາດຕາ 58 (ປັບປຸງ) ຂໍ້ຫ້າມສຳລັບເດັກ

ຫ້າມ ເດັກ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ເສບຢາເສບຕິດ, ດື່ມເຄື່ອງດື່ມທີ່ມີທາດເຫຼົ້າ, ຊົມໃຊ້ຢາສູບ, ຢາສູບໄຟຟ້າ ແລະ ສິ່ງເສບຕິດອື່ນ;

2. ໃຫ້ບໍລິການຢູ່ຫ້ອງບັນເທີງ, ເຮືອນພັກ, ໂຮງແຮມ, ຮ້ານກິນດື່ມ;

3. ໃຊ້ບໍລິການຢູ່ຫ້ອງບັນເທີງ, ເຮືອນພັກ, ໂຮງແຮມ, ຮ້ານກິນດື່ມ ໃນທາງທີ່ບໍ່ຖືກຕ້ອງ ເປັນຕົ້ນ ເສບຢາເສບຕິດ, ດື່ມສິ່ງມຶນເມົາ, ມົ້ວສຸມທາງເພດ;

4. ມົ້ວສຸມສິ່ງລາມົກ, ອະນາຈານ;

5. ຫຼິ້ນເກມນອກຫຼັກສູດການຮຽນ-ການສອນ ໃນເວລາເຂົ້າໂຮງຮຽນ;

6. ຫຼິ້ນການພະນັນທຸກປະເພດ;

7. ຖືອາວຸດ ຫຼື ວັດຖຸລະເບີດ ທີ່ບໍ່ຖືກຕ້ອງຕາມກົດໝາຍ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ X
## ຄະນະກຳມະການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ

### ມາດຕາ 59 (ໃໝ່) ຄະນະກຳມະການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ

ຄະນະກຳມະການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ແມ່ນ ການຈັດຕັ້ງໜຶ່ງ ທີ່ບໍ່ປະຈຳການ, ມີພາລະບົດບາດເປັນເສນາທິການ ໃນການຄົ້ນຄວ້າ, ຊີ້ນຳ ແລະ ປະສານງານກັບກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ.

ຄະນະກຳມະການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ປະກອບດ້ວຍ:

1. ຄະນະກຳມະການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຂັ້ນສູນກາງ;
2. ຄະນະກຳມະການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຂັ້ນແຂວງ;
3. ຄະນະກຳມະການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຂັ້ນເມືອງ;
4. ຕາໜ່າງປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ.

**ມາດຕາ 60 (ໃໝ່) ຄະນະກຳມະການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຂັ້ນສູນກາງ**

ຄະນະກຳມະການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຂັ້ນສູນກາງ ຂຽນຫຍໍ້ວ່າ "ຄປດສ" ຖືກແຕ່ງຕັ້ງໂດຍນາຍົກລັດຖະມົນຕີ ຕາມການສະເໜີຂອງລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການສັງຄົມ ມີພາລະບົດບາດໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ມາດຕະການ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ໂດຍມີກົມສັງຄົມສົງເຄາະ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນກອງເລຂາ.

ຄະນະກຳມະການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຂັ້ນສູນກາງ ປະກອບດ້ວຍ:

| | |
|---|---|
| 1. ຮອງນາຍົກລັດຖະມົນຕີ | ເປັນປະທານ; |
| 2. ລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການສັງຄົມ | ເປັນຮອງປະທານ; |
| 3. ຮອງລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ | ເປັນຮອງປະທານ; |
| 4. ຮອງລັດຖະມົນຕີກະຊວງສາທາລະນະສຸກ | ເປັນຮອງປະທານ; |
| 5. ຮອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ | ເປັນກຳມະການ; |
| 6. ຮອງລັດຖະມົນຕີກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ | ເປັນກຳມະການ; |
| 7. ຮອງລັດຖະມົນຕີກະຊວງພາຍໃນ | ເປັນກຳມະການ; |
| 8. ຮອງລັດຖະມົນຕີກະຊວງຍຸຕິທຳ | ເປັນກຳມະການ; |
| 9. ຮອງລັດຖະມົນຕີກະຊວງການເງິນ | ເປັນກຳມະການ; |
| 10. ຮອງປະທານສູນກາງສະຫະພັນແມ່ຍິງລາວ | ເປັນກຳມະການ; |
| 11. ຮອງເລຂາຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ | ເປັນກຳມະການ. |

**ມາດຕາ 61 (ໃໝ່) ຄະນະກຳມະການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຂັ້ນແຂວງ**

ຄະນະກຳມະການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຂັ້ນແຂວງ ຂຽນຫຍໍ້ວ່າ "ຄປດຂ" ຖືກແຕ່ງຕັ້ງໂດຍເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຕາມການສະເໜີຂອງຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມ ຂັ້ນແຂວງ, ມີພາລະບົດບາດໃນການນຳພາຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ມາດຕະການ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ໂດຍມີຂະແໜງສັງຄົມສົງເຄາະ ພະແນກແຮງງານ ແລະ ສະຫວັດດີການສັງຄົມ ຂັ້ນແຂວງ ເປັນກອງເລຂາ.

ຄະນະກຳມະການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຂັ້ນແຂວງ ປະກອບດ້ວຍ:

| | |
|---|---|
| 1. ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງ | ເປັນປະທານ; |
| 2. ຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມ | ເປັນຮອງປະທານ; |
| 3. ຮອງຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບ | ເປັນຮອງປະທານ; |
| 4. ຮອງຫົວໜ້າພະແນກສາທາລະນະສຸກ | ເປັນຮອງປະທານ; |
| 5. ຮອງຫົວໜ້າພະແນກສຶກສາທິການ ແລະ ກິລາ | ເປັນກຳມະການ; |
| 6. ຮອງຫົວໜ້າພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ | ເປັນກຳມະການ; |
| 7. ຮອງຫົວໜ້າພະແນກພາຍໃນ | ເປັນກຳມະການ; |
| 8. ຮອງຫົວໜ້າພະແນກຍຸຕິທຳ | ເປັນກຳມະການ; |
| 9. ຮອງຫົວໜ້າພະແນກການເງິນ | ເປັນກຳມະການ; |
| 10. ຮອງປະທານສະຫະພັນແມ່ຍິງ | ເປັນກຳມະການ; |
| 11. ຮອງເລຂາຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວ | ເປັນກຳມະການ. |

**ມາດຕາ 62 (ໃໝ່) ຄະນະກຳມະການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຂັ້ນເມືອງ**

ຄະນະກຳມະການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຂັ້ນເມືອງ ຂຽນຫຍໍ້ວ່າ "ຄປດມ" ຖືກແຕ່ງຕັ້ງໂດຍ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ຕາມການສະເໜີຂອງຫົວໜ້າຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ ຂັ້ນເມືອງ, ມີພາລະບົດບາດໃນການນຳພາຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ມາດຕະການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ໂດຍມີໜ່ວຍງານສັງຄົມສົງເຄາະ ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ ຂັ້ນເມືອງ ເປັນກອງເລຂາ.

ຄະນະກຳມະການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຂັ້ນເມືອງ ປະກອບດ້ວຍ:

1. ຮອງເຈົ້າເມືອງ, ຮອງຫົວໜ້າເທດສະບານ, ຮອງເຈົ້ານະຄອນ ເປັນປະທານ;
2. ຫົວໜ້າຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ ເປັນຮອງປະທານ;
3. ຮອງຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບ ເປັນຮອງປະທານ;
4. ຮອງຫົວໜ້າຫ້ອງການສາທາລະນະສຸກ ເປັນຮອງປະທານ;
5. ຮອງຫົວໜ້າຫ້ອງການສຶກສາທິການ ແລະ ກິລາ ເປັນກຳມະການ;
6. ຮອງຫົວໜ້າຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນກຳມະການ;
7. ຮອງຫົວໜ້າຫ້ອງການພາຍໃນ ເປັນກຳມະການ;
8. ຮອງຫົວໜ້າຫ້ອງການການເງິນ ເປັນກຳມະການ;
9. ຮອງຫົວໜ້າຫ້ອງການຍຸຕິທຳ ເປັນກຳມະການ;
10. ຮອງປະທານສະຫະພັນແມ່ຍິງ ເປັນກຳມະການ;
11. ຮອງເລຂາຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວ ເປັນກຳມະການ.

**ມາດຕາ 63 (ໃໝ່) ສິດ ແລະ ໜ້າທີ່ ຂອງຄະນະກຳມະການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຂັ້ນສູນກາງ, ຂັ້ນແຂວງ, ຂັ້ນເມືອງ**

ຄະນະກຳມະການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຂັ້ນສູນກາງ, ຂັ້ນແຂວງ, ຂັ້ນເມືອງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ ແລະ ປະກອບຄຳເຫັນຕໍ່ຮ່າງ ນະໂຍບາຍ, ແຜນຍຸດທະສາດ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ເພື່ອສະເໜີຂັ້ນເທິງພິຈາລະນາ;

2. ເປັນເຈົ້າການຮັບຜິດຊອບໃນການນຳພາ, ຊີ້ນຳ, ສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບປົກປ້ອງເດັກໃນ ສປປ ລາວ ໂດຍຜ່ານກົນໄກການປະສານງານ ແລະ ຈັດຕັ້ງປະຕິບັດວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;

3. ຮັບການລາຍງານ, ຊອກຮູ້ ແລະ ນຳໃຊ້ມາດຕະການອັນຮີບດ່ວນ ເພື່ອປົກປ້ອງ ແລະ ຊ່ວຍເຫຼືອເດັກທີ່ຕ້ອງປົກປ້ອງພິເສດ ແລະ ເດັກທີ່ມີຄວາມສ່ຽງ;

4. ອອກແຈ້ງການ ກ່ຽວກັບວິທີການຈັດຕັ້ງປະຕິບັດວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ໃຫ້ພາກສ່ວນທີ່ກ່ຽວຂ້ອງ;

5. ຊຸກຍູ້, ສົ່ງເສີມ ໃຫ້ສັງຄົມ ແລະ ຊຸມຊົນ ແກ້ໄຂບັນຫາ ເດັກທີ່ຕ້ອງປົກປ້ອງພິເສດ ແລະ ເດັກມີຄວາມສ່ຽງ ຕາມສະພາບ ແລະ ເງື່ອນໄຂຕົວຈິງ;

6. ພິຈາລະນາທາງເລືອກໃນການເບິ່ງແຍງລ້ຽງດູເດັກ ຕາມເງື່ອນໄຂຕົວຈິງ;

7. ປຸກລະດົມກຳລັງແຮງທົ່ວສັງຄົມ ທັງພາຍໃນ ແລະ ຕ່າງປະເທດ ໃນການປະກອບສ່ວນທາງດ້ານວັດຖຸ, ທຶນຮອນ ແລະ ເຕັກນິກວິຊາການ ເຂົ້າຮ່ວມໃນວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;

8. ຊຸກຍູ້, ແນະນຳ ແລະ ຕິດຕາມ ກວດກາ ກ່ຽວກັບການປະຕິບັດທາງເລືອກໃນການເບິ່ງແຍງລ້ຽງດູເດັກ ຂອງບັນດາສູນ ຫຼື ສະຖານ ທີ່ກ່ຽວຂ້ອງ;

9. ຈັດ ຫຼື ເຂົ້າຮ່ວມ ກອງປະຊຸມ, ສໍາມະນາ, ຝຶກອົບຮົມ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຢູ່ພາຍໃນ ແລະ ຕ່າງປະເທດ ຕາມການເຊີນ ແລະ ຕາມການມອບໝາຍຂອງຂັ້ນເທິງ;

10. ຊຸກຍູ້ ແລະ ຕິດຕາມ ກວດກາການເຄື່ອນໄຫວວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຂອງຄະນະກໍາມະການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຂັ້ນລຸ່ມຂອງຕົນ;

11. ຈັດຕັ້ງປະຕິບັດສົນທິສັນຍາ, ສັນຍາສາກົນ ແລະ ແຜນປະຕິບັດງານສາກົນ ທີ່ກ່ຽວຂ້ອງ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;

12. ພົວພັນ, ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;

13. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຕໍ່ຂັ້ນເທິງຂອງຕົນ ຢ່າງເປັນປົກກະຕິ;

14. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

**ມາດຕາ 64 (ໃໝ່) ສິດ ແລະ ໜ້າທີ່ ຂອງກອງເລຂາຄະນະກໍາມະການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຂັ້ນສູນກາງ, ຂັ້ນແຂວງ, ຂັ້ນເມືອງ**

ກອງເລຂາຄະນະກໍາມະການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຂັ້ນສູນກາງ, ຂັ້ນແຂວງ, ຂັ້ນເມືອງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ, ສັງລວມ ແລະ ສະເໜີແຜນການ ລວມທັງມາດຕະການໃນການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຕໍ່ຄະນະກໍາມະການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຂັ້ນຂອງຕົນພິຈາລະນາ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ນິຕິກໍາໃຕ້ກົດໝາຍ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ໃຫ້ທຸກພາກສ່ວນຮັບຮູ້;

3. ຕິດຕາມ, ກວດກາ, ຊຸກຍູ້ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ມາດຕະການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;

4. ປະສານສົມທົບກັບບັນດາຂະແໜງການ, ອົງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ເພື່ອສັງລວມລາຍງານສະພາບ ເດັກທີ່ຕ້ອງການປົກປ້ອງພິເສດ ແລະ ເດັກທີ່ມີຄວາມສ່ຽງ ຕໍ່ ຄະນະກໍາມະການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຂັ້ນຂອງຕົນ;

5. ເກັບກໍາ, ສັງລວມຂໍ້ມູນ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ເພື່ອລາຍງານຕໍ່ຄະນະກໍາມະການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຂັ້ນຂອງຕົນ;

6. ເປັນໃຈກາງປະສານສົມທົບກັບບັນດາຂະແໜງການ, ພາກສ່ວນທີ່ກ່ຽວຂ້ອງ ເພື່ອສັງລວມລາຍງານສະພາບເດັກທີ່ຕ້ອງປົກປ້ອງພິເສດ ແລະ ເດັກທີ່ມີຄວາມສ່ຽງ ພ້ອມທັງສະເໜີແຜນການປະຕິບັດ ຕໍ່ ຄະນະກໍາມະການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຂັ້ນຂອງຕົນ;

7. ເຂົ້າຮ່ວມກອງປະຊຸມ, ສໍາມະນາ, ຝຶກອົບຮົມ ທັງພາຍໃນ ແລະ ຕ່າງປະເທດ ຕາມການມອບໝາຍ;

8. ກະກຽມກອງປະຊຸມ ຄະນະກໍາມະການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຂັ້ນຂອງຕົນ;

9. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຕໍ່ ຄະນະກໍາມະການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຂັ້ນຂອງຕົນ ຢ່າງເປັນປົກກະຕິ;

10. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

**ມາດຕາ 65 (ໃໝ່) ຕາໜ່າງປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ**

ຕາໜ່າງປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຂຽນຫຍໍ້ວ່າ "ຕປດ" ແມ່ນ ເຄືອຂ່າຍຂອງຄະນະກໍາມະການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຢູ່ຂັ້ນບ້ານ ຊຶ່ງຖືກແຕ່ງຕັ້ງໂດຍນາຍບ້ານ ມີພາລະບົດບາດເປັນເຈົ້າການໃນການຈັດຕັ້ງປະຕິບັດວຽກງານປົກປ້ອງສິດ ແລະ ຜົນປະໂຫຍຂອງເດັກ ຢູ່ພາຍໃນບ້ານຂອງຕົນ.

**ມາດຕາ 66 (ໃໝ່) ສິດ ແລະ ໜ້າທີ່ ຂອງຕາໜ່າງປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ**

ຕາໜ່າງປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ມາດຕະການ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;
2. ເຜີຍແຜ່ກົດໝາຍ ແລະ ລະບຽບການ ກ່ຽວກັບການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ໃຫ້ປະຊາຊົນ ຢ່າງເປັນປົກກະຕິ;
3. ໂຄສະນາ, ປຸກຈິດສໍານຶກໃຫ້ແກ່ປະຊາຊົນ ມີຄວາມເຂົ້າໃຈ ຕໍ່ຜົນກະທົບຂອງການທາລຸນເດັກ, ການໃຊ້ຄວາມຮຸນແຮງ, ການຂູດຮີດ ແລະ ການປ່ອຍປະລະເລີຍ, ການຂູດຮີດທາງເພດ ແລະ ການລ່ວງລະເມີດ ເດັກທາງສື່ອອນລາຍ ເພື່ອປົກປ້ອງ ແລະ ຊ່ວຍເຫຼືອເດັກ;
4. ເກັບກໍາຂໍ້ມູນ, ສະຖິຕິ ເດັກທີ່ຕ້ອງການປົກປ້ອງພິເສດ ແລະ ເດັກທີ່ມີຄວາມສ່ຽງ;
5. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຕໍ່ຄະນະກໍາມະການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຂັ້ນເມືອງ ຢ່າງເປັນປົກກະຕິ;
6. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

## ພາກທີ XI
## ການຄຸ້ມຄອງ ແລະ ການກວດກາ ວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ
### ໝວດທີ 1
### ການຄຸ້ມຄອງວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ

**ມາດຕາ 67 (ປັບປຸງ) ອົງການຄຸ້ມຄອງວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ**

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນໃຈກາງໃນການຈັດຕັ້ງປະຕິບັດ ແລະ ປະສານສົມທົບກັບ ກະຊວງປ້ອງກັນຄວາມສະຫງົບ, ກະຊວງສາທາລະນະສຸກ, ກະຊວງສຶກສາທິການ ແລະ ກິລາ, ກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ, ກະຊວງພາຍໃນ, ກະຊວງຍຸຕິທໍາ, ກະຊວງອື່ນ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດ.

**ມາດຕາ 68 (ໃໝ່) ສິດ ແລະ ໜ້າທີ່ ຂອງຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ**

ໃນການຄຸ້ມຄອງວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ນະໂຍບາຍ, ວິໄສທັດ, ແຜນຍຸດທະສາດ ແລະ ກົດໝາຍ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ເພື່ອສະເໜີລັດຖະບານພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ວິໄສທັດ, ແຜນຍຸດທະສາດ ແລະ ກົດໝາຍ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ເປັນ ລະບຽບການ, ແຜນການ, ແຜນງານ, ໂຄງການ, ກິດຈະກຳ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ວິໄສທັດ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ, ໂຄງການ ແລະ ກິດຈະກຳ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;

4. ສ້າງ, ຍົກລະດັບດ້ານວິຊາສະເພາະ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ໃຫ້ແກ່ພະນັກງານ-ລັດຖະກອນ ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ;

5. ໃຫ້ການຊ່ວຍເຫຼືອທາງດ້ານມະນຸດສະທຳ ແລະ ສັງຄົມສົງເຄາະ ໃຫ້ແກ່ເດັກຖືກເຄາະຮ້າຍ, ເດັກຖືກປະລະ, ເດັກຖືກປະຖິ້ມ, ເດັກມີຄວາມສ່ຽງ ແລະ ເດັກພໍ່ ແມ່ ຫຼື ຜູ້ປົກຄອງ ຖືກດຳເນີນຄະດີ;

6. ຮັກສາຄວາມລັບ ກ່ຽວກັບຂໍ້ມູນຂອງ ເດັກຖືກເຄາະຮ້າຍ, ເດັກຖືກປະລະ, ເດັກຖືກປະຖິ້ມ, ເດັກທີ່ມີຄວາມສ່ຽງ ແລະ ເດັກທີ່ພໍ່ ແມ່ ຫຼື ຜູ້ປົກຄອງ ຖືກດຳເນີນຄະດີ ທີ່ໄດ້ໃຫ້ການຊ່ວຍເຫຼືອ;

7. ສ້າງ, ຄຸ້ມຄອງ ແລະ ນຳໃຊ້ກອງທຶນປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;

8. ສ້າງ, ຄຸ້ມຄອງ, ພັດທະນາ ແລະ ນຳໃຊ້ລະບົບ ຂໍ້ມູນ ຂ່າວສານ ການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;

9. ຊີ້ນຳ, ຕິດຕາມ ແລະ ປະເມີນ ການເຄື່ອນໄຫວວຽກງານປົກປ້ອງ ແລະ ຊ່ວຍເຫຼືອເດັກ ຂອງບັນດາສູນ ຫຼື ສະຖານທີ່ເບິ່ງແຍງລ້ຽງດູເດັກ;

10. ສັງລວມຂໍ້ມູນ ແລະ ເກັບກຳສະຖິຕິ ກ່ຽວກັບເດັກຖືກເຄາະຮ້າຍ, ເດັກຖືກປະລະ, ເດັກຖືກປະຖິ້ມ, ເດັກມີຄວາມສ່ຽງ ແລະ ເດັກທີ່ ພໍ່ ແມ່ ຫຼື ຜູ້ປົກຄອງ ຖືກດຳເນີນຄະດີ ທີ່ໄດ້ໃຫ້ການຊ່ວຍເຫຼືອ ລວມທັງກໍລະນີ ແລະ ເສັ້ນທາງການສົ່ງຕໍ່ເດັກດັ່ງກ່າວ;

11. ຮັບ, ພິຈາລະນາ ແລະ ແກ້ໄຂ ຄຳສະເໜີ ຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;

12. ປະສານສົມທົບກັບຂະແໜງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງໃນການຄຸ້ມຄອງ, ຕິດຕາມ ກວດກາ ແລະ ສົ່ງເສີມ ວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;

13. ພົວພັນ ແລະ ຮ່ວມມືທາງດ້ານມະນຸດສະທຳ ແລະ ສັງຄົມສົງເຄາະ ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;

14. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຕໍ່ຂັ້ນເທິງຂອງຕົນ ຢ່າງເປັນປົກກະຕິ;

15. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 69 (ໃໝ່) ສິດ ແລະ ໜ້າທີ່ ຂອງຂະແໜງການປ້ອງກັນຄວາມສະຫງົບ**

ໃນການຄຸ້ມຄອງວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຂະແໜງການປ້ອງກັນຄວາມສະຫງົບ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ນະໂຍບາຍ, ວິໄສທັດ, ແຜນຍຸດທະສາດ ແລະ ກົດໝາຍ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ເພື່ອສະເໜີລັດຖະບານ ພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ວິໄສທັດ, ແຜນຍຸດທະສາດ ແລະ ກົດໝາຍ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ເປັນ ລະບຽບການ, ແຜນການ, ແຜນງານ, ໂຄງການ, ກິດຈະກຳ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ວິໄສທັດ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ, ໂຄງການ ແລະ ກິດຈະກຳ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;

4. ສ້າງກົນໄກ ແລະ ດຳເນີນຂະບວນການຕ້ານ ແລະ ສະກັດກັ້ນອາຊະຍາກຳຕໍ່ເດັກ;

5. ໃຫ້ການຊ່ວຍເຫຼືອເດັກຖືກເຄາະຮ້າຍ, ເດັກຖືກປະລະ, ເດັກປະຖິ້ມ, ເດັກມີຄວາມສ່ຽງ;

6. ດຳເນີນການໄກ່ເກ່ຍການກະທຳຜິດຂອງເດັກ ໂດຍບໍ່ສົ່ງໃຫ້ສານຕັດສິນ;

7. ດຳເນີນການສືບສວນ-ສອບຖາມເດັກ ແລະ ນຳໃຊ້ມາດຕະການສະກັດກັ້ນຕໍ່ເດັກ ໃນກໍລະນີຈຳເປັນ;

8. ສ້າງຫຼັກສູດການຮຽນ-ການສອນ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ເຂົ້າໃນສະຖານການສຶກສາ;

9. ຮັກສາຄວາມລັບ ກ່ຽວກັບຂໍ້ມູນຂອງ ເດັກຖືກເຄາະຮ້າຍ, ເດັກຖືກປະລະ, ເດັກຖືກປະຖິ້ມ, ເດັກທີ່ມີຄວາມສ່ຽງ ທີ່ໄດ້ໃຫ້ການຊ່ວຍເຫຼືອ;

10. ຍົກລະດັບດ້ານວິຊາສະເພາະ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ໃຫ້ແກ່ພະນັກງານຂອງຕົນ;

11. ສັງລວມຂໍ້ມູນ ແລະ ເກັບກຳສະຖິຕິ ກ່ຽວກັບການເຄື່ອນໄຫວວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;

12. ຮັບ, ພິຈາລະນາ ແລະ ແກ້ໄຂ ຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;

13. ພົວພັນ ແລະ ຮ່ວມມືທາງດ້ານມະນຸດສະທຳ ແລະ ສັງຄົມສົງເຄາະ ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;

14. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຕໍ່ຂັ້ນເທິງຂອງຕົນ ຢ່າງເປັນປົກກະຕິ;

15. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 70 (ໃໝ່) ສິດ ແລະ ໜ້າທີ່ຂອງຂະແໜງການສາທາລະນະສຸກ**

ໃນການຄຸ້ມຄອງວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຂະແໜງການສາທາລະນະສຸກ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ນະໂຍບາຍ, ວິໄສທັດ, ແຜນຍຸດທະສາດ ແລະ ກົດໝາຍ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ເພື່ອສະເໜີລັດຖະບານພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ວິໄສທັດ, ແຜນຍຸດທະສາດ ແລະ ກົດໝາຍ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ເປັນ ລະບຽບການ, ແຜນການ, ແຜນງານ, ໂຄງການ, ກິດຈະກຳ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ວິໄສທັດ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ, ໂຄງການ ແລະ ກິດຈະກຳ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;

4. ສ້າງ, ຍົກລະດັບດ້ານວິຊາສະເພາະ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ໃຫ້ແກ່ພະນັກງານ-ລັດຖະກອນ ຂອງຕົນ;

5. ໃຫ້ການຊ່ວຍເຫຼືອທາງດ້ານສຸຂະພາບ ແກ່ເດັກຖືກເຄາະຮ້າຍ, ເດັກຖືກປະລະ, ເດັກຖືກປະຖິ້ມ;

6. ຮັກສາຄວາມລັບ ກ່ຽວກັບຂໍ້ມູນຂອງ ເດັກຖືກເຄາະຮ້າຍ, ເດັກຖືກປະລະ, ເດັກຖືກປະຖິ້ມ ທີ່ໄດ້ໃຫ້ການຊ່ວຍເຫຼືອ;

7. ຊີ້ນຳ, ຕິດຕາມ ແລະ ປະເມີນ ການເຄື່ອນໄຫວວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກຂອງບັນດາໂຮງໝໍ ຫຼື ສະຖານທີ່ປິ່ນປົວເດັກ;

8. ອຳນວຍຄວາມສະດວກໃຫ້ແກ່ເດັກ ໃນການເຂົ້າເຖິງການບໍລິການດ້ານສາທາລະນະສຸກ;

9. ສັງລວມຂໍ້ມູນ ແລະ ເກັບກຳສະຖິຕິ ກ່ຽວກັບເດັກຖືກເຄາະຮ້າຍ, ເດັກຖືກປະລະ, ເດັກຖືກປະຖິ້ມທີ່ໄດ້ໃຫ້ການຊ່ວຍເຫຼືອ ລວມທັງກໍລະນີ ແລະ ເສັ້ນທາງການສົ່ງຕໍ່ເດັກດັ່ງກ່າວ;

10. ຮັບ, ພິຈາລະນາ ແລະ ແກ້ໄຂ ຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;

11. ປະສານສົມທົບກັບຂະແໜງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງໃນການຄຸ້ມຄອງ, ຕິດຕາມ ກວດກາ ແລະ ສົ່ງເສີມ ວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;

12. ພົວພັນ ແລະ ຮ່ວມມືທາງດ້ານສາທາລະນະສຸກ ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;

13. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຕໍ່ຂັ້ນເທິງຂອງຕົນ ຢ່າງເປັນປົກກະຕິ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 71 (ໃໝ່) ສິດ ແລະ ໜ້າທີ່ ຂອງຂະແໜງການສຶກສາທິການ ແລະ ກິລາ**

ໃນການຄຸ້ມຄອງວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຂະແໜງການສຶກສາທິການ ແລະ ກິລາ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ນະໂຍບາຍ, ວິໄສທັດ, ແຜນຍຸດທະສາດ ແລະ ກົດໝາຍ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ເພື່ອສະເໜີລັດຖະບານ ພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ວິໄສທັດ, ແຜນຍຸດທະສາດ ແລະ ກົດໝາຍ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ເປັນ ລະບຽບການ, ແຜນການ, ແຜນງານ, ໂຄງການ, ກິດຈະກຳ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ວິໄສທັດ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ, ໂຄງການ ແລະ ກິດຈະກຳ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;

4. ເຊື່ອມສານວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ເຂົ້າໃນຫຼັກສູດການຮຽນ-ການສອນຂອງສາຍສາມັນສຶກສາ;

5. ສ້າງ, ຍົກລະດັບດ້ານວິຊາສະເພາະ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ໃຫ້ແກ່ພະນັກງານ-ລັດຖະກອນຂອງຕົນ;

6. ສ້າງຫຼັກສູດການຮຽນ-ການສອນ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ເຂົ້າໃນສະຖານການສຶກສາຂອງຕົນ;

7. ສ້າງກົນໄກການແກ້ໄຂການກະທຳຜິດຂອງເດັກ ຢູ່ໃນໂຮງຮຽນ ແລະ ສະຖານການສຶກສາ;

8. ຮັກສາຄວາມລັບ ກ່ຽວກັບຂໍ້ມູນຂອງເດັກກະທຳຜິດ;

9. ຊີ້ນຳ, ຕິດຕາມ ແລະ ປະເມີນ ການເຄື່ອນໄຫວວຽກງານປົກປ້ອງ ແລະ ຊ່ວຍເຫຼືອເດັກ ຂອງບັນດາໂຮງຮຽນ, ສະຖານການສຶກສາຂອງເດັກ;

10. ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ເດັກທຸກຄົນສາມາດເຂົ້າເຖິງການສຶກສາ ຢ່າງໜ້ອຍສາມາດຈົບການສຶກສາຊັ້ນມັດທະຍົມຕອນຕົ້ນ;

11. ເກັບກຳ, ສັງລວມຂໍ້ມູນ ກ່ຽວກັບເດັກປະລະການຮຽນ ແລະ ດຳເນີນການແກ້ໄຂ ເພື່ອໃຫ້ເດັກສາມາດກັບໄປຮຽນເປັນປົກກະຕິ;

12. ຮັບ, ພິຈາລະນາ ແລະ ແກ້ໄຂ ຄຳສະເໜີ ຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;

13. ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ເດັກທີ່ຖືພາກ່ອນໄວອັນຄວນ ໄດ້ຮັບການສຶກສາຢ່າງປົນປົກກະຕິ;

14. ໃຫ້ຄຳປຶກສາແກ່ເດັກທີ່ມີຄວາມສ່ຽງ;

15. ສັງລວມຂໍ້ມູນ ແລະ ເກັບກຳສະຖິຕິ ກ່ຽວກັບການສຶກສາຂອງເດັກ, ການສຶກສາຮຽນຮ່ວມຂອງເດັກພິການ;

16. ປະສານສົມທົບກັບຂະແໜງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງໃນການຄຸ້ມຄອງ, ຕິດຕາມ ກວດກາ ແລະ ສົ່ງເສີມວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;

17. ພົວພັນ ແລະ ຮ່ວມມືທາງດ້ານການສຶກສາ ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;

18. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຕໍ່ຂັ້ນເທິງຂອງຕົນ ຢ່າງເປັນປົກກະຕິ;

19. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 72 (ໃໝ່) ສິດ ແລະ ໜ້າທີ່ ຂອງຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ**

ໃນການຄຸ້ມຄອງວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຄົ້ນຄວ້າ ສ້າງນະໂຍບາຍ ແລະ ລະບຽບການ ກ່ຽວກັບການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ເພື່ອສະເໜີຕໍ່ຂັ້ນເທິງພິຈາລະນາ;

2. ໂຄສະນາ ເຜີຍແຜ່, ສຶກສາອົບຮົມ, ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ແນວທາງນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;

3. ເຊື່ອມສານວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ເຂົ້າໃນວຽກງານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;

4. ສ້າງກົນໄກໃນການປ້ອງກັນການທ່ອງທ່ຽວທາງເພດເດັກ;

5. ສ້າງ, ຍົກລະດັບດ້ານວິຊາສະເພາະ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ໃຫ້ແກ່ພະນັກງານ-ລັດຖະກອນ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ;

6. ຕິດຕາມ, ກວດກາ ສື່ມວນຊົນ, ທຸລະກິດການທ່ອງທ່ຽວ ແລະ ສະຖານການບັນເທີງ, ເຮືອນພັກ, ໂຮງແຮມ, ຮ້ານກິນດື່ມຂອງຕົນ ທີ່ບໍລິການປະເພດ ເຫຼົ້າ, ເບຍ ຫຼື ເຄື່ອງດື່ມທີ່ມີສິ່ງມຶນເມົາ ເພື່ອບໍ່ໃຫ້ເກີດມີການຄ້າມະນຸດ ແລະ ສິ່ງຫຍໍ້ທໍ້ອື່ນ;

7. ຊີ້ນຳ, ຕິດຕາມ ແລະ ປະເມີນ ການເຄື່ອນໄຫວວຽກງານປົກປ້ອງ ແລະ ຊ່ວຍເຫຼືອເດັກ ຂອງບັນດາສະຖານການບັນເທີງ, ເຮືອນພັກ, ໂຮງແຮມ, ຮ້ານກິນດື່ມຂອງຕົນ ທີ່ບໍລິການປະເພດ ເຫຼົ້າ, ເບຍ ຫຼື ເຄື່ອງດື່ມທີ່ມີສິ່ງມຶນເມົາ;

8. ສັງລວມຂໍ້ມູນ ແລະ ເກັບກຳສະຖິຕິ ກ່ຽວກັບການເຄື່ອນໄຫວວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;

9. ຮັບ, ພິຈາລະນາ ແລະ ແກ້ໄຂ ຄຳສະເໜີ ຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;

10. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ຕໍ່ຂັ້ນເທິງຂອງຕົນ ຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 73 (ໃໝ່) ສິດ ແລະ ໜ້າທີ່ ຂອງຂະແໜງການພາຍໃນ**

ໃນການຄຸ້ມຄອງວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຂະແໜງການພາຍໃນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ນະໂຍບາຍ, ວິໄສທັດ, ແຜນຍຸດທະສາດ ແລະ ກົດໝາຍ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ເພື່ອສະເໜີລັດຖະບານພິຈາລະນາ;

2. ພັນຂະຫຍາຍ ນະໂຍບາຍ, ວິໄສທັດ, ແຜນຍຸດທະສາດ ແລະ ກົດໝາຍ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ເປັນ ລະບຽບການ, ແຜນການ, ແຜນງານ, ໂຄງການ, ກິດຈະກຳ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ວິໄສທັດ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ, ໂຄງການ ແລະ ກິດຈະກຳ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;

4. ສ້າງ, ຍົກລະດັບດ້ານວິຊາສະເພາະ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ໃຫ້ແກ່ພະນັກງານ-ລັດຖະກອນຂອງຕົນ;

5. ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃນການຈົດທະບຽນຄອບຄົວຂອງເດັກ;

6. ຮັບ, ພິຈາລະນາ ແລະ ແກ້ໄຂ ຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;

7. ສັງລວມຂໍ້ມູນ ແລະ ເກັບກຳສະຖິຕິ ກ່ຽວກັບການຈົດທະບຽນຄອບຄົວຂອງເດັກ;

8. ຮັກສາຄວາມລັບ ກ່ຽວກັບຂໍ້ມູນການຈົດທະບຽນຄອບຄົວຂອງເດັກ;

9. ປະສານສົມທົບກັບຂະແໜງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄຸ້ມຄອງ, ຕິດຕາມ ກວດກາ ແລະ ສົ່ງເສີມວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;

10. ພົວພັນ ແລະ ຮ່ວມມືທາງດ້ານທະບຽນຄອບຄົວ ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;

11. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຕໍ່ຂັ້ນເທິງຂອງຕົນ ຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 74 (ໃໝ່) ສິດ ແລະ ໜ້າທີ່ ຂອງຂະແໜງການຍຸຕິທຳ**

ໃນການຄຸ້ມຄອງວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຂະແໜງການຍຸຕິທຳ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ນະໂຍບາຍ, ວິໄສທັດ, ແຜນຍຸດທະສາດ ແລະ ກົດໝາຍ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ເພື່ອສະເໜີລັດຖະບານພິຈາລະນາ;

2. ພັນຂະຫຍາຍ ນະໂຍບາຍ, ວິໄສທັດ, ແຜນຍຸດທະສາດ ແລະ ກົດໝາຍ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ເປັນ ລະບຽບການ, ແຜນການ, ແຜນງານ, ໂຄງການ, ກິດຈະກຳ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ວິໄສທັດ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ, ໂຄງການ ແລະ ກິດຈະກຳ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;

4. ເອົາວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ເຂົ້າໃນຫຼັກສູດການຮຽນ-ການສອນ ຢູ່ສະຖານການສຶກສາຂອງຕົນ;

5. ສ້າງ, ຍົກລະດັບດ້ານວິຊາສະເພາະ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ໃຫ້ແກ່ພະນັກງານ-ລັດຖະກອນ ຂອງຕົນ;

6. ໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍ ໃຫ້ແກ່ເດັກກະທຳຜິດ, ເດັກຖືກເຄາະຮ້າຍ ແລະ ເດັກເປັນພະຍານ;

7. ຈັດຕັ້ງປະຕິບັດຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ກ່ຽວກັບບັນຫາທາງແພ່ງໃນຄະດີເດັກ;

8. ຮັບ, ພິຈາລະນາ ແລະ ແກ້ໄຂ ຄຳສະເໜີ ຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;

9. ສັງລວມຂໍ້ມູນ ແລະ ເກັບກຳສະຖິຕິ ກ່ຽວກັບການໄກ່ເກ່ຍການກະທຳຜິດຂອງເດັກ ແລະ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ກ່ຽວກັບຄະດີເດັກ;

10. ປະສານສົມທົບກັບຂະແໜງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງໃນການຄຸ້ມຄອງ, ຕິດຕາມ ກວດກາ ແລະ ສົ່ງເສີມວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;

11. ພົວພັນ ແລະ ຮ່ວມມືທາງດ້ານຍຸຕິທຳ ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;

12. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຕໍ່ຂັ້ນເທິງຂອງຕົນ ຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 75 (ໃໝ່) ສິດ ແລະ ໜ້າທີ່ ຂອງຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ**

ຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ໃຫ້ການຮ່ວມມື ແລະ ປະສານສົມທົບກັບຂະແໜງການ ແຮງງານ ແລະ ສະຫວັດດີການສັງຄົມ, ປ້ອງກັນຄວາມສະຫງົບ, ສາທາລະນະສຸກ, ສຶກສາທິການ ແລະ ກິລາ, ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ພາຍໃນ, ຍຸຕິທຳ ໃນການຄຸ້ມຄອງ, ຕິດຕາມ ກວດກາ ວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

## ໝວດທີ 2
## ການກວດກາວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ

**ມາດຕາ 76 (ໃໝ່) ອົງການກວດກາວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ**

ອົງການກວດກາວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 67 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດແຕ່ລະຂັ້ນ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ ແລະ ສື່ມວນຊົນ.

**ມາດຕາ 77 (ໃໝ່) ເນື້ອໃນການກວດກາ**

ການກວດກາວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ມີເນື້ອໃນ ດັ່ງນີ້:

1. ການຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;

2. ການປະຕິບັດໜ້າທີ່ຂອງພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;

3. ການສ້າງ ແລະ ປະຕິບັດແຜນການ, ແຜນງານ, ໂຄງການ ແລະ ກິດຈະກຳ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;

4. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 78 (ໃໝ່) ຮູບການການກວດກາ**

ການກວດກາ ມີ ຮູບການ ດັ່ງນີ້:

1. ການກວດກາຕາມແຜນການປົກກະຕິ ຊຶ່ງແມ່ນ ການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປົກກະຕິ ແລະ ມີກຳນົດເວລາທີ່ແນ່ນອນ;

2. ການກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາ ຮູ້ກ່ອນລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາແບບຮີບດ່ວນ ທີ່ບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ກ່ອນລ່ວງໜ້າ.

ໃນການກວດກາ ໃຫ້ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.

## ພາກທີ XII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 79 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

ເດັກຜູ້ໃດຫາກໄດ້ເປັນແບບຢ່າງທີ່ດີແກ່ໝູ່ເພື່ອນ ໃນການປະຕິບັດສິດ ແລະ ຄວາມຮັບຜິດຊອບຂອງຕົນ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມຄວາມເໝາະສົມ.

**ມາດຕາ 80 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຈະຖືກ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງທີ່ຕົນໄດ້ກໍ່ຂຶ້ນ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

## ພາກທີ XIII
## ບົດບັນຍັດສຸດທ້າຍ

**ມາດຕາ 81 ການຈັດຕັ້ງປະຕິບັດ**

ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດ ກົດໝາຍສະບັບນີ້.

**ມາດຕາ 82 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 27 ທັນວາ 2023 ພາຍຫຼັງປະທານປະເທດແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ສະບັບເລກທີ 05/ສພຊ, ລົງວັນທີ 27 ທັນວາ 2006.

ປະທານສະພາແຫ່ງຊາດ



ປອ ໄຊສົມພອນ ພົມວິຫານ